ERNST & YOUNG COPY

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

EY
Building a better working world

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1
ບົດລາຍງານຂອງຄະນະອຳນວຍການ	2
ບົດລາຍງານຂອງບໍລິສັດສອບບັນຊີ	3 - 7
ໃບລາຍງານຜົນດຳເນີນ ຫຼື ຂາດທຶນ	8
ໃບລາຍງານຜົນການດຳເນີນງານບໍ່ສາມາດໝຸນວຽນ	9
ໃບລາຍງານຖານະການເງິນ	10
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	11
ໃບລາຍງານກະແສເງິນສົດ	12
ບົດອະທິບາຍຊ້ອນທ້າຍເຊິ່ງເປັນສ່ວນໜຶ່ງຂອງລາຍງານການເງິນ	13 - 63

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ຈຳກັດ, ເປັນບໍລິສັດ ມະຫາຊົນທີ່ດຳເນີນທຸລະກິດໃນ ສປປ ລາວ ອີງຕາມໃບທະບຽນວິສາຫະກິດ ເລກທີ 081/ກຫຄວ ອອກໂດຍ ກົມທະບຽນ ແລະ ຄຸ້ມ ຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 5 ກຸມພາ 2015 ແລະ ໃບທະບຽນວິສາຫະກິດສະບັບປັບປຸງລ່າສຸດ ເລກທີ 0222/ກຫຄວ, ລົງວັນທີ 19 ກຸມພາ 2019. ບໍລິສັດໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ (ທຫລ) ລົງວັນທີ 2 ກຸມພາ 2015 ແລະ ສະບັບປັບປຸງລ່າສຸດ ວັນທີ 14 ກັນຍາ 2017 ໃນການດຳເນີນກິດຈະການໃຫ້ເຊົ່າສິນເຊື່ອ. ໃນວັນທີ 9 ກັນຍາ 2019, ບໍລິສັດໄດ້ຍື່ນໃບຢັ້ງຢືນການສະເໜີຂາຍຫຸ້ນຕໍ່ສາທາລະນະຄັ້ງທຳອິດ (IPO) ເຊິ່ງອອກໂດຍຫ້ອງການຄະນະກຳມະການຫຼັກຊັບລາວ. ຫຸ້ນຂອງບໍລິສັດທັງໝົດແມ່ນ 301,500,000 ຫຸ້ນ (ພາຍໃຕ້ຊື່ "LALCO") ໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການ ຕັ້ງແຕ່ວັນທີ 19 ສິງຫາ 2019 ເປັນຕົ້ນໄປ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການໃຫ້ເຊົ່າຊື້ໂດຍການສະໜອງສິນເຊື່ອເຊົ່າຊື້ສຳລັບລູກຄ້າສ່ວນບຸກຄົນ ແລະ ບໍລິສັດຕ່າງໆ ເພື່ອຊື້ລົດຈັກ, ລົດໃຫຍ່ ແລະ ອະສັງຫາລິມະຊັບ.

ທຶນຈົດທະບຽນທີ່ຖອກແລ້ວ

ທຶນຈົດທະບຽນທີ່ຖອກແລ້ວຂອງບໍລິສັດ ນະວັນທີ 31 ທັນວາ 2025 ແມ່ນ 30,150,000,000 ກີບ (ນະວັນທີ 31 ທັນວາ 2024 ແມ່ນ 30,150,000,000 ກີບ).

ທີ່ຕັ້ງ

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ຊັ້ນ 2, ອາຄານ NNN, ບ້ານ ໄຫນສົມບອນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ສະພາບໍລິຫານ

ສະມາຊິກຂອງສະພາບໍລິຫານ ນະວັນທີອອກບົດລາຍງານສະບັບນີ້ມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ນາງ Yuki Scott	ປະທານ	ແຕ່ງຕັ້ງຄືນວັນທີ 28 ເມສາ 2022
ທ່ານ Mitsuteru Nagaya	ຮອງປະທານ	ແຕ່ງຕັ້ງວັນທີ 15 ກັນຍາ 2021
ທ່ານ Yoshihito Oshima	ສະມາຊິກ	ແຕ່ງຕັ້ງວັນທີ 13 ກັນຍາ 2022
ທ່ານ Hirofumi Inada	ສະມາຊິກ	ແຕ່ງຕັ້ງວັນທີ 15 ກັນຍາ 2021
ທ່ານ Harumi Ide	ສະມາຊິກ	ແຕ່ງຕັ້ງຄືນວັນທີ 28 ເມສາ 2022

ຄະນະອຳນວຍການ

ສະມາຊິກຂອງຄະນະອຳນວຍການໃນລະຫວ່າງປີ 2025 ແລະ ນະວັນທີອອກບົດລາຍງານສະບັບນີ້ມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ Yoshihito Oshima	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ 13 ກັນຍາ 2022

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດພາຍໃນປີ ແລະ ນະວັນທີບົດລາຍງານແມ່ນ ທ່ານ Yoshihito Oshima – ຜູ້ອຳນວຍການ.

ນັກກວດສອບບັນຊີ
ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອິນ ແອນ ຢັ ງ ລາວ ຈຳກັດ.

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງບໍລິສັດສະບັບທີ ແລະ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025.

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນ

ຄະນະອຳນວຍການຂອງບໍລິສັດມີໜ້າທີ່ຮັບຜິດຊອບຕໍ່ເອກະສານລາຍງານການເງິນ ທີ່ສະແດງໃຫ້ເຫັນຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຄວາມຍຸດຕິທຳຂອງຖານະການເງິນຂອງບໍລິສັດ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດພາຍໃນປີ. ໃນການກະກຽມເອກະສານລາຍງານການເງິນ, ຄະນະອຳນວຍການຂອງບໍລິສັດຈະຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານຈະຕ້ອງຖືກເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນຍຶນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ ຍົກເວັ້ນໃນກໍລະນີທີ່ຄາດຄະເນວ່າ ບໍລິສັດຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການຂອງບໍລິສັດມີໜ້າທີ່ຮັບຜິດຊອບເພື່ອຮັບປະກັນວ່າ ບັນດາຍົ້ມນຫາງການບັນຊີທີ່ຖືກຍັບຫົ້ວໄວ້ກ່ຽວກັບຖານະການເງິນຂອງບໍລິສັດ ໄດ້ເປີດເຜີຍຄວາມຖືກຕ້ອງຢູ່ຕະຫຼອດເວລາ, ເພື່ອຮັບປະກັນວ່າການບັນທຶກການບັນຊີແມ່ນສອດຄ່ອງກັບຂອບເຂດການບັນທຶກບັນຊີທີ່ເໝາະສົມ. ບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີຂັ້ນຕອນປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການຂອງບໍລິສັດໄດ້ຢັ້ງຢືນວ່າ ບໍລິສັດໄດ້ປະຕິບັດຕາມເງື່ອນໄຂສຳຄັນໃນການກະກຽມເອກະສານລາຍງານການເງິນ.

ຖະແຫຼງການຂອງຄະນະອຳນວຍການ

ຄະນະບໍລິຫານຂອງບໍລິສັດມີຄວາມຍິນດີຖະແຫຼງວ່າ, ໃນຄຳຫັ້ນຂອງບໍລິສັດ, ເອກະສານລາຍງານການເງິນທີ່ສະແດງໃຫ້ເຫັນຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຄວາມຍຸດຕິທຳຂອງຖານະການເງິນຂອງບໍລິສັດ ວັນທີ 31 ທັນວາ 2025 ແລະ ຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ກະແສເງິນສົດຂອງປີທີ່ສິ້ນສຸດວັນທີດັ່ງກ່າວ ໂດຍສອດຄ່ອງກັບມາດຕະຖານການລາຍງານການເງິນສາກົນ.

ຕາງໜ້າ ແລະ ໃນນາມຄະນະອຳນວຍການ:

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

29 ກໍລະກົດ 2026

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 11729320/69093165

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ: ຜູ້ຖືຮຸ້ນຂອງບໍລິສັດ ລາວ ອາຊຽນ ເຊີ່ງຊິນເຊື່ອ ມະຫາຊົນ

ຄຳຕັ້ນ

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງ ບໍລິສັດ ລາວ ອາຊຽນ ເຊີ່ງຊິນເຊື່ອ ມະຫາຊົນ ("ບໍລິສັດ"), ເຊິ່ງ ປະກອບດ້ວຍໃບລາຍງານຖານະການເງິນ ນະວັນທີ 31 ທັນວາ 2025 ແລະ ໃບລາຍງານຜົນກຳໄລ ຫຼື ຂາດທຶນ ແລະ ໃບລາຍງານຜົນການດຳ ເນີນງານນອກການທຸລະກິດ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ລວມທັງບັນດາຂໍ້ມູນນະໂຍບາຍການບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນ ຂອງບໍລິສັດໄດ້ຖືກນຳສະເໜີຖືກຕ້ອງຕາມຄວາມເປັນຈິງ ແລະ ຍຸດຕິທຳໃນ ທຸກປະການຂອງເອກະສານລາຍງານຖານະການເງິນ ນະວັນທີ 31 ທັນວາ 2025 ແລະ ຜົນການດຳເນີນງານ, ລາຍງານສ່ວນປ່ຽນແປງທຶນ ເຈົ້າຂອງ ແລະ ກະແສເງິນສົດສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ (IFRSs).

ພື້ນຖານໃນການອອກຄຳຕັ້ນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ (ISAs). ບັນດາຄວາມຮັບຜິດຊອບ ຂອງພວກຂ້າພະເຈົ້າທີ່ໄດ້ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມໃນພາກ *ຄວາມຮັບຜິດຊອບຂອງນັກກວດ ສອບໃນການກວດສອບເອກະສານລາຍງານການເງິນ* ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເອກະລາດຈາກ ບໍລິສັດ ໂດຍສອດຄ່ອງກັບກົດຈັນຍາບັນວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ (IESBA Code) ແລະ ບັນດາຂໍ້ ກຳນົດທາງຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າ ບັງໄດ້ປະຕິບັດຍັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບຂໍ້ກຳນົດ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດ ສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ຄວນເອົາໃຈໃສ່

ບົດອະທິບາຍເລກທີ 19 ຂອງເອກະສານລາຍງານການເງິນທີ່ເປີດເຜີຍວ່າ: ມີສ່ວນຕ່າງຂອງໜີ້ຕ້ອງສົ່ງອາກອນກຳໄລທີ່ຕ້ອງຊຳລະນະວັນທີ 31 ທັນວາ 2025 ລະຫວ່າງມູນຄ່າທີ່ຮັບຮູ້ໃນເອກະສານລາຍງານການເງິນ ແລະ ບົດສະຫຼຸບການກວດກາຂອງເຈົ້າໜ້າທີ່ສ່ວຍສາອາກອນ. ບັນຫາດັ່ງກ່າວອາດສົ່ງຜົນຕໍ່ການໄຫຼລຽງຄົນພັນທະອາກອນ ໂດຍເຈົ້າໜ້າທີ່ສ່ວຍສາອາກອນໃນອະນາຄົດ.

ບັນຫາທີ່ສຳຄັນໃນການກວດສອບ

ບັນຫາທີ່ສຳຄັນໃນການກວດສອບແມ່ນບັນຫາທີ່ເກີດຈາກການໃຊ້ດຸນພິນິດແຍບມິຄາຊິນຂອງພວກຂ້າພະເຈົ້າ, ເຊິ່ງມີຄວາມສຳຄັນຫຼາຍໃນ ການກວດສອບເອກະສານລາຍງານການເງິນຂອງປີປະຈຸບັນ. ບັນຫາເຫຼົ່ານີ້ໄດ້ຖືກລະບຸໄວ້ໃນເນື້ອໃນຂອງເອກະສານລາຍງານການເງິນທີ່ ກວດສອບໂດຍພວກຂ້າພະເຈົ້າໂດຍລວມ ແລະ ໃນຮູບແບບຄຳເຫັນຂອງພວກຂ້າພະເຈົ້າ ແລະ ພວກຂ້າພະເຈົ້າບໍ່ໄດ້ສະໜອງຄຳເຫັນແຍກ ຍ້ອຍກ່ຽວກັບບັນຫາດັ່ງກ່າວ. ສຳລັບບັນຫາຈຸ່ມນີ້, ພວກຂ້າພະເຈົ້າໄດ້ໃຫ້ນິຍາມວິທີການຄົ້ນພົບບັນຫາເຊິ່ງຖືກລະ ໜອງໃນເນື້ອໃນ ດັ່ງກ່າວ.

ພວກຂ້າພະເຈົ້າ ໄດ້ປະຕິບັດຕາມຄວາມຮັບຜິດຊອບທີ່ໄດ້ອະທິບາຍໄວ້ໃນພາກ *ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບ ເອກະສານລາຍງານການເງິນໃນບົດລາຍງານ* ຂອງພວກຂ້າພະເຈົ້າ, ລວມທັງບັນຫາທີ່ກ່ຽວຂ້ອງກັບບັນຫາທີ່ເຫຼົ່ານີ້. ດັ່ງນັ້ນ, ການກວດສອບ ຂອງພວກຂ້າພະເຈົ້າ ລວມທັງການປະຕິບັດບັນດາຂັ້ນຕອນທີ່ອອກແບບມາເພື່ອຕອບສະໜອງຕໍ່ການປະເມີນຄວາມສ່ຽງທີ່ມີສາລະສຳຄັນ ຂອງເອກະສານລາຍງານການເງິນ. ຜົນຂອງຂັ້ນຕອນການກວດສອບຂອງພວກຂ້າພະເຈົ້າ, ລວມທັງບັນດາຂັ້ນຕອນເພື່ອແກ້ໄຂບັນຫາດັ່ງຈຸ່ມ ນີ້, ເປັນພື້ນຖານໃນການອອກຄຳເຫັນຂອງພວກຂ້າພະເຈົ້າ ຕໍ່ເອກະສານລາຍງານການເງິນ.

A member firm of Ernst & Young Global Limited

ຂົງເຂດຄວນເອົາໃຈໃສ່	ວິທີການຂັ້ນຕົ້ນຂອງພວກຂ້າພະເຈົ້າໃນການຈັດການກັບເລື່ອງ
ເງິນແຂ່ວເຜື່ອມມູນຄ່າສຳລັບໜີ້ທີ່ຕ້ອງຮັບສິນຍາເຊົ່າຊື້	ຂັ້ນຕອນການແກ້ໄຂບັນຫາການກວດສອບທີ່ສຳຄັນຂອງພວກຂ້າພະເຈົ້າລວມເຖິງ ແຕ່ບໍ່ຈຳກັດພຽງ:
ນະວັນທີ 31 ທັນວາ 2025, ບໍລິສັດມີໜີ້ຕ້ອງຮັບສິນຍາເຊົ່າຊື້ມູນຄ່າ 1,916 ຕື້ກີບ ເຊິ່ງກວມເອົາ 93% ຂອງຊັບສິນທັງໝົດ, ບໍລິສັດໄດ້ຮັບຮູ້ເງິນແຂ່ວເຜື່ອມມູນຄ່າຈຳນວນ 460 ຕື້ກີບ ສຳລັບໜີ້ທີ່ຄາດຄະເນຈະສູນເສຍ ("ECL") ທີ່ກ່ຽວຂ້ອງກັບລູກໜີ້ການເຊົ່າຊື້ເຫຼົ່ານີ້. ການວັດແທກມູນຄ່າ ເງິນແຂ່ວເຜື່ອມມູນຄ່າຈຳເປັນຕ້ອງໃຊ້ດຸນພິນິດທີ່ສຳຄັນຂອງຜູ້ບໍລິຫານ ແລະ ລວມທັງການຄາດຄະເນ ແຕ່ບໍ່ຈຳກັດພຽງ: ► ການລະບຸຄວາມສ່ຽງດ້ານສິນເຊື່ອ ຂອງລາຍການໃນໃບສະຫຼຸບຊັບສິນບັດ ແລະ ນອກໃບສະຫຼຸບຊັບສິນບັດ ທີ່ກ່ຽວກັບການເພີ່ມຂຶ້ນຢ່າງສຳຄັນຂອງຄວາມສ່ຽງດ້ານສິນເຊື່ອນັບຕັ້ງແຕ່ມື້ຫ້າຍິດ; ► ສົມມຸດຖານໃນການນຳໃຊ້ແບບຈຳລອງ ECL ເຊັ່ນ: ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະ ("PD"), ຍອດໜີ້ເມື່ອຜິດນັດຊຳລະ ("EAD"), ແລະ ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະ ("LGD") ແລະ ► ການເລືອກເຟັ້ນປັດໃຈລ່ວງໜ້າ ແລະ ການຖ່ວງນ້ຳໜັກຄວາມເປັນໄປໄດ້ຂອງເຫດການທາງເສດຖະກິດທີ່ຫຼາກຫຼາຍ.	ຂັ້ນຕອນຫຼັກທີ່ພວກຂ້າພະເຈົ້າປະຕິບັດ ໂດຍສົມທົບກັບຜູ້ຊ່ຽວຊານດ້ານໄອທີ ແລະ ຜູ້ຊ່ຽວຊານການສ້າງແບບຈຳລອງທາງສິນເຊື່ອ, ກ່ຽວກັບໜີ້ທີ່ຄາດຄະເນຈະສູນເສຍຂອງລູກໜີ້ສິນຍາເຊົ່າຊື້ ລວມທັງ: ► ສຳລັບການຈັດຂັ້ນ ແລະ ການລະບຸຄວາມສ່ຽງທາງດ້ານສິນເຊື່ອທີ່ເພີ່ມຂຶ້ນຢ່າງສຳຄັນ, ພວກຂ້າພະເຈົ້າໄດ້ປະເມີນ ແລະ ທົດສອບຄວາມເໝາະສົມຂອງອົງປະກອບທີ່ບໍລິສັດນຳໃຊ້. ພວກຂ້າພະເຈົ້າປະເມີນວ່າອົງປະກອບໃນການໂອນແມ່ນສອດຄ່ອງກັບການປະຕິບັດການບໍລິຫານຄວາມສ່ຽງທາງດ້ານສິນເຊື່ອຂອງບໍລິສັດ, ► ສຳລັບການວັດແທກ ECL, ພວກຂ້າພະເຈົ້າໄດ້ປະເມີນ ແລະ ທົດສອບຄວາມສົມເຫດສົມຜົນຂອງແບບຈຳລອງ ECL ຂອງບໍລິສັດ, ລວມທັງການຍ້ອນຮັບແບບຈຳລອງ, ການອອກແບບ ແລະ ການປະຕິບັດຂອງແບບຈຳລອງທີ່ສຳຄັນ. ພວກຂ້າພະເຈົ້າຕັ້ງຂໍ້ສົງໄສໂດຍອີງໃສ່ປະສົບການໃນອະດີດ ເຊິ່ງເປັນຕົວແທນຂອງສະຖານະການປັດຈຸບັນ ແລະ ປະສົບການການສູນເສຍທີ່ຜ່ານມາ ແລະ ປະເມີນຄວາມສົມເຫດສົມຜົນຂອງການແກ້ໄຂລ່ວງໜ້າ, ການວິເຄາະປັດໃຈເສດຖະກິດມະຫາພາກ ແລະ ເຫດການທາງເສດຖະກິດທີ່ຫຼາກຫຼາຍທີ່ຄາດວ່າຈະເກີດຂຶ້ນ, ► ພວກຂ້າພະເຈົ້າໄດ້ປະເມີນວ່າມີການປ່ຽນແປງໃນວິທີການສ້າງແບບຈຳລອງ, ຕົວປ່ຽນ ແລະ ສົມມຸດຖານແມ່ນມີຄວາມ

A member firm of Ernst & Young Global Limited

ສິ່ງຫຼາຍທີ່ຄວນເອົາໃຈໃສ່	ວິທີການຮັບມືຂອງພວກຂ້າພະເຈົ້າກ່ຽວກັບຫົວໃຈຫຼັກທີ່ສຳຄັນ
	ຈຳເປັນ ແລະ ຖ້າມີການປ່ຽນແປງຕ່າງໆທີ່ເໝາະສົມ. ພວກຂ້າພະເຈົ້າຍັງໄດ້ປະເມີນ, ທົດສອບ ແລະ ຕິດຕາມຄວາມອ່ອນໄຫວຂອງຕົ້ນຕໍທີ່ຄາດວ່າຈະສົ່ງຜົນກະທົບຕໍ່ການປ່ຽນແປງສົມມຸດຖານໃນການສ້າງແບບຈຳລອງ, ► ພວກຂ້າພະເຈົ້າໄດ້ສົມທຽບຂໍ້ມູນທີ່ນຳໃຊ້ເຂົ້າແບບຈຳລອງ ECL ກັບແຫຼ່ງຂໍ້ມູນຕົ້ນທາງຂອງລະບົບ ແລະ ທົດສອບຕົວຢ່າງຂອງການປ້ອນຂໍ້ມູນ ເພື່ອໃຫ້ແນ່ໃຈວ່າຂໍ້ມູນ ECL ໄດ້ຮັບການຖ່າຍໂອນຈາກລະບົບຕົ້ນທາງໄປສູ່ແບບຈຳລອງ ECL ຢ່າງຖືກຕ້ອງ, ► ພວກຂ້າພະເຈົ້າໄດ້ຄົ້ນຄ້ວາຫຼັກຖານການຄົ້ນຄ້ວາຂອງຄະນະບໍລິຫານຄືນໃໝ່ ເພື່ອປະເມີນຄວາມຄົບຖ້ວນສົມບູນ ແລະ ຖືກຕ້ອງຂອງເງື່ອນໄຂ ແລະ ຄ່າເສື່ອມມູນຄ່າຂອງບໍລິສັດ, ພວກຂ້າພະເຈົ້າຍັງໄດ້ປະເມີນການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນນັ້ນພຽງພໍ ແລະ ສະທ້ອນເຖິງຄວາມສ່ຽງດ້ານສິນເຊື່ອຂອງບໍລິສັດໄດ້ຢ່າງເໝາະສົມ.

ຄວາມຮັບຜິດຊອບຂອງຄະນະບໍລິຫານ ແລະ ຄະນະຜູ້ມີຫນ້າທີ່ຮັບຜິດຊອບຕໍ່ເອກະສານລາຍງານການເງິນ

ຄະນະອຳນວຍການຂອງບໍລິສັດມີໜ້າທີ່ຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນໂດຍສອດຄ່ອງກັບ IFRSs ແລະ ບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະອຳນວຍການເຫັນວ່າມີຄວາມຈຳເປັນເພື່ອໃຫ້ສາມາດກະກຽມເອກະສານລາຍງານການເງິນທີ່ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະອຳນວຍການບໍລິສັດຫາກເຫັນວ່າທຸລະກິດບໍ່ມີຄວາມສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະອຳນວຍການບໍລິສັດມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ຄະນະຄຸ້ມຄອງແມ່ນມີໜ້າທີ່ໃນການຮັບຜິດຊອບໃນການຄວບຄຸມຂັ້ນຕອນການສ້າງເອກະສານລາຍງານການເງິນຂອງບໍລິສັດ.

ຂໍ້ມູນອື່ນໆ

ຄະນະອຳນວຍການຂອງບໍລິສັດແມ່ນມີຄວາມຮັບຜິດຊອບຕໍ່ກັບຂໍ້ມູນອື່ນໆ. ຂໍ້ມູນອື່ນໆປະກອບມີຂໍ້ມູນທີ່ລວມຢູ່ໃນການຍື່ນຕອບຄືນຍື່ນການດຳເນີນທຸລະກິດ ແຕ່ບໍ່ໄດ້ລວມເອົາເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບຂອງພວກຂ້າພະເຈົ້າ. ການຍື່ນຕອບຄືນຍື່ນການດຳເນີນທຸລະກິດຄາດວ່າຈະກຽມພ້ອມໃຫ້ແກ່ພວກຂ້າພະເຈົ້າ ຫຼັງຈາກວັນທີທີ່ອອກບົດລາຍງານຂອງຜູ້ກວດສອບສະບັບນີ້.

ຄວາມຄິດເຫັນຂອງພວກເຮົາກ່ຽວກັບເອກະສານລາຍງານທາງດ້ານການເງິນ ບໍ່ໄດ້ກວມເອົາຂໍ້ມູນອື່ນໆ ແລະ ພວກເຮົາຈະບໍ່ສະແດງຄຳຄິດເຫັນຕໍ່ກັບຂໍ້ມູນດັ່ງກ່າວ.

ກ່ຽວກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າມີຄວາມຮັບຜິດຊອບຕໍ່ການອ່ານຂໍ້ມູນອື່ນໆທີ່ກ່າວເຖິງຂ້າງເທິງ, ພິຈາລະນາຖ້າຫາກວ່າຂໍ້ມູນອື່ນໆບໍ່ສອດຄ່ອງກັບເອກະສານລາຍງານການເງິນ ຫຼື ຂໍ້ມູນທີ່ໄດ້ຮັບໃນການກວດສອບ ຫຼື ເປັນຂໍ້ຜິດພາດທີ່ສຳຄັນ.

A member firm of Ernst & Young Global Limited

Building a better working world

ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າ ແມ່ນເພື່ອຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍລວມ ແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງແຕ່ບໍ່ໄດ້ຮັບປະກັນວ່າການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າສຳຄັນຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິດໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳຕັດສິນຂອງພວກຂ້າພະເຈົ້າ ຄວາມສ່ຽງຈາກການທີ່ບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຍ້ອນມາຈາກການສໍ້ໂກງ ແມ່ນສູງກວ່າຄວາມສ່ຽງທີ່ມີຍ້ອນມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງ ບໍລິສັດ.
- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງໂດຍຄະນະອຳນວຍການ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະອຳນວຍການ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໄສທີ່ສຳຄັນກ່ຽວກັບຄວາມສາມາດຂອງບໍລິສັດໃນຄວາມສືບເນື່ອງໃນການດຳເນີນທຸ ລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າ ມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກອາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອະນາຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ບໍລິສັດຢຸດດຳເນີນສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.
- ປະເມີນການນຳສະເໜີໂດຍລວມ, ໂຄງສ້າງ ແລະ ເນື້ອໃນຂອງເອກະສານລາຍງານການເງິນ, ລວມທັງການເປີດເຜີຍ ແລະ ການເປັນຕົວແທນທຸລະກຳຂອງເອກະສານລາຍງານການເງິນ ແລະ ເຫດການທີ່ເຮັດໃຫ້ບັນລຸການນຳສະເໜີທີ່ຍຸດຕິທຳ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະອຳນວຍການຂອງບໍລິສັດກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນ ລວມທັງບັນດາຂໍ້ບົກພ່ອງທີ່ສຳຄັນໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

A member firm of Ernst & Young Global Limited

Building a better working world

ພວກຂ້າພະເຈົ້າໄດ້ໃຫ້ຖະແຫຼງການກັບຜູ້ທີ່ມີໜ້າທີ່ໃນການຄວບຄຸມວ່າ ພວກຂ້າພະເຈົ້າໄດ້ປະຕິບັດຕາມຫຼັກຈັນຍາບັນທີ່ກ່ຽວຂ້ອງກັບຄວາມເປັນເອກະລາດ, ການສື່ສານຂອງພວກຂ້າພະເຈົ້າກ່ຽວກັບຄວາມສຳພັນ ແລະ ບັນຫາອື່ນໆທີ່ອາດມີຜົນກະທົບພວກຂ້າພະເຈົ້າຄວນຄຳນຶງເຖິງຄວາມເປັນເອກະລາດຂອງພວກຂ້າພະເຈົ້າ ແລະ ການປ້ອງກັນທີ່ກ່ຽວຂ້ອງ ຖ້າ

ຈາກການປຶກສາຫາລືກັບຜູ້ທີ່ມີໜ້າທີ່ໃນການຄວບຄຸມກ່ຽວກັບບັນຫາຕ່າງໆ, ພວກຂ້າພະເຈົ້າພິຈະລະບຸວ່າສິ່ງເຫຼົ່ານັ້ນເປັນສິ່ງທີ່ສຳຄັນທີ່ສຸດໃນການກວດສອບເອກະສານການເງິນໃນໄລຍະປະຈຸບັນ ແລະ ເປັນບັນຫາທີ່ສຳຄັນໃນການກວດສອບ. ພວກຂ້າພະເຈົ້າໄດ້ອະທິບາຍເຫດການເຫຼົ່ານັ້ນໃນບົດລາຍງານນິຕິກວດສອບອິດສະຫຼະຂອງພວກຂ້າພະເຈົ້າ, ເວັ້ນເສຍແຕ່ຖ້າມີກົດໝາຍ ຫຼື ຂໍ້ບັງຄັບທີ່ບໍ່ອະນຸຍາດໃຫ້ເປີດເຜີຍຕໍ່ມວນຊົນ ຫຼື ເມື່ອໃນສະຖານະການທີ່ຫາຜູ້ຍາກພວກຂ້າພະເຈົ້າຫາຫາພິຈາລະນາວ່າບັນຫາເຫຼົ່ານັ້ນບໍ່ຄວນສື່ສານໃນບົດລາຍງານຂອງພວກຂ້າພະເຈົ້າເພາະອາດຈະເກີດຜົນກະທົບດ້ານລົບຈາກການກະທຳນັ້ນໆຫຼາຍກວ່າຜົນປະໂຫຍດຕໍ່ມວນຊົນກ່ຽວກັບການສື່ສານດັ່ງກ່າວ.

ໃນນາມ ແລະ ຕາງໜ້າ ບໍລິສັດ ເອີນ ແອນ ຍັ ລາວ ຈຳກັດ

Van Le
ຮຸ້ນສ່ວນ
ໃບອະນຸຍາດດຳເນີນການກວດສອບ
ເລກທີ 018/LCPAA_APT-2019

ນະຄອນຫຼວງວຽງຈັນ, ສປປ ລາວ

29 ກໍລະກົດ 2026

A member firm of Ernst & Young Global Limited

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນກຳໄລ ຫຼື ຂາດທຶນ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	2025 ກີບ	2024 ກີບ
ລາຍຮັບດອກເບ້ຍທີ່ໄດ້ຄິດໄລ່ໂດຍການນຳໃຊ້ວິທີດອກເບ້ຍທີ່ແທ້ຈິງ		578,341,485,895	365,023,556,340
ດອກເບ້ຍອື່ນໆ ແລະ ລາຍຮັບທີ່ຄ້າຍຄືກັນ		36,313,348,028	27,590,778,549
ລາຍຈ່າຍດອກເບ້ຍທີ່ໄດ້ຄິດໄລ່ໂດຍການນຳໃຊ້ວິທີດອກເບ້ຍທີ່ແທ້ຈິງ		(17,237,314,571)	(6,116,526,245)
ລາຍຮັບດອກເບ້ຍສຸດທິ	8	**597,417,519,352**	**386,497,808,644**
ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ	9	(15,391,936,842)	(14,887,889,954)
ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າສຸດທິ		**(15,391,936,842)**	**(14,887,889,954)**
ກຳໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ		(54,373,479,410)	37,311,620,749
ລາຍຮັບອື່ນໆຈາກການດຳເນີນງານ	10	193,428,106	954,776,688
ລວມລາຍຮັບຈາກການດຳເນີນງານ		**527,845,531,206**	**409,876,316,127**
ການປ່ຽນແປງເງິນແຮສຳລັບການເສື່ອມມູນຄ່າ	11	(139,924,463,050)	(58,671,537,269)
ລາຍຮັບຈາກການດຳເນີນງານສຸດທິ		**387,921,068,156**	**351,204,778,858**
ລາຍຈ່າຍທີ່ກ່ຽວຂ້ອງກັບພະນັກງານ	12	(66,910,589,112)	(66,043,679,094)
ຄ່າຫຼ້ຽຫ້ຽນຂອງຊັບສິນບັດ ແລະ ອຸປະກອນ	18	(3,595,602,269)	(4,142,394,372)
ລາຍຈ່າຍໃນການດຳເນີນງານອື່ນໆ	13	(83,148,816,304)	(62,889,586,662)
ລວມລາຍຈ່າຍຈາກການດຳເນີນງານ		**(153,655,007,685)**	**(133,075,660,128)**
ກຳໄລກ່ອນຫັກອາກອນ		**234,266,060,471**	**218,129,118,730**
ລາຍຈ່າຍອາກອນກຳໄລພາຍໃນປີ	21	(47,845,979,256)	(50,038,160,600)
ກຳໄລສຸດທິພາຍໃນປີ		**186,420,081,215**	**168,090,958,130**

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ທ່ານ ນາງ Nguyen Thi Huong Mai
ຜູ້ກະກຽມ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ກໍລະກົດ 2026

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນການດຳເນີນງານບອກການຫຸ້ລະກິດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	2025 ກີບ	2024 ກີບ
ກຳໄລສຸດທິຍາຍໃນປີ		**186,420,081,215**	**168,090,958,130**
ລາຍຮັບອື່ນງານອາການຫຸ້ລະກິດ			
ລວມລາຍຮັບອື່ນງານອາການຫຸ້ລະກິດຍາຍໃນປີ		-	-
ລວມລາຍຮັບບອກການຫຸ້ລະກິດຍາຍໃນປີ, ອາກອນສຸດທີ ກຳໄລຕໍ່ຮຸ້ນ		**186,420,081,215**	**168,090,958,130**
ຂຶ້ນຖານ, ກຳໄລພາຍໃນປີຢັນສ່ວນໃຫ້ກັບຜູ້ຖືຮຸ້ນສາມັນ	22	618	558

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ທ່ານ ນາງ Nguyen Thi Huong Mai
ຜູ້ກະກຽມ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ກໍລະກົດ 2026

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	*31 ທັນວາ 2025 ກີບ*	*31 ທັນວາ 2024 ກີບ*
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ທຽບເທົ່າເງິນສົດ	14	107,292,627,879	101,609,825,868
ເງິນຝາກຢູ່ທະນາຄານ	15	133,527,518,718	131,181,528,904
ໜີ້ຕ້ອງຮັບສັນຍາເຊົ່າຊື້ - ສ່ວນທີ່ໝຸນວຽນ	16	1,351,427,781,004	1,329,813,233,523
ຊັບສິນໝຸນວຽນອື່ນໆ	17	360,779,609,799	154,521,612,766
ລວມຊັບສິນໝຸນວຽນ		**1,953,027,537,400**	**1,717,126,201,061**
ຊັບສິນບໍ່ໝຸນວຽນ			
ໜີ້ຕ້ອງຮັບສັນຍາເຊົ່າຊື້ - ສ່ວນທີ່ບໍ່ໝຸນວຽນ	16	104,530,480,192	33,836,059,635
ຊັບສິນຄົງທົນ ແລະ ອຸປະກອນ	18	8,912,520,181	8,815,421,319
ລວມຊັບສິນບໍ່ໝຸນວຽນ		**113,443,000,373**	**42,651,480,954**
ລວມຊັບສິນ		**2,066,470,537,773**	**1,759,777,682,015**
ໜີ້ສິນ			
ໜີ້ສິນໝຸນວຽນ			
ເງິນກູ້ຢືມໄລຍະສັ້ນ	20	125,309,839,409	139,271,000,000
ຍັນທະທາງກົດໝາຍ	19	229,568,196,641	180,443,146,571
ໜີ້ສິນໝຸນວຽນອື່ນໆ		4,406,088,357	3,435,808,896
ລວມໜີ້ສິນໝຸນວຽນ		**359,284,124,407**	**323,149,955,467**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	20	138,868,334,100	18,716,101,993
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ	24	721,571,931	555,198,435
ລວມໜີ້ສິນບໍ່ໝຸນວຽນ		**139,589,906,031**	**19,271,300,428**
ລວມໜີ້ສິນ		**498,874,030,438**	**342,421,255,895**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	23	30,150,000,000	30,150,000,000
ສ່ວນເພີ່ມມູນຄ່າຮຸ້ນ	23	155,497,646,314	155,497,646,314
ທຶນອື່ນໆ		290,000,000	290,000,000
ກຳໄລສະສົມ		1,366,583,861,021	1,216,343,779,806
ຄົງລໍຖ້າອອກດ ແລະ ບຽນການ		15,075,000,000	15,075,000,000
ລວມທຶນ		**1,567,596,507,335**	**1,417,356,426,120**
ລວມໜີ້ສິນ ແລະ ທຶນ		**2,066,470,537,773**	**1,759,777,682,015**

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ທ່ານ ນາງ Nguyen Thi Huong Mai
ຜູ້ກະກຽມ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ກໍລະກົດ 2026

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ທຶນຈົດທະບຽນ ທີ່ໄດ້ຖອກເລ່ືອ ກີບ	ກຳໄລສະສົມ ຕາມລະບຽບການ ກີບ	ສ່ວນເພີ່ມມູນຄ່າຫຸ້ນ ກີບ	ທຶນອື່ນໆ ກີບ	ກຳໄລສະສົມ ກີບ	ລວມ ກີບ
ຍອດເຫຼືອນະວັນທີ 01 ມັງກອນ 2024	**30,150,000,000**	**15,075,000,000**	**155,497,646,314**	**290,000,000**	**1,366,629,429,676**	**1,567,642,075,990**
ກຳໄລພາຍໃນປີ	-	-	-	-	168,090,958,130	168,090,958,130
ຄັງສຳຮອງຕາມລະບຽບການ	-	-	-	-	-	-
ຈ່າຍເງິນປັນຜົນ (*)	-	-	-	-	(318,376,608,000)	(318,376,608,000)
ຍອດເຫຼືອນະວັນທີ 31 ທັນວາ 2024	**30,150,000,000**	**15,075,000,000**	**155,497,646,314**	**290,000,000**	**1,216,343,779,806**	**1,417,356,426,120**
ກຳໄລພາຍໃນປີ	-	-	-	-	186,420,081,215	186,420,081,215
ຈ່າຍເງິນປັນຜົນ (**)	-	-	-	-	(36,180,000,000)	(36,180,000,000)
ຍອດເຫຼືອນະວັນທີ 31 ທັນວາ 2025	**30,150,000,000**	**15,075,000,000**	**155,497,646,314**	**290,000,000**	**1,366,583,861,021**	**1,567,596,507,335**

(*) ການເບີກຈ່າຍເງິນປັນຜົນແມ່ນໄດ້ຮັບການອະນຸມັດຈາກສະພາອຳນວຍການ ອີງຕາມຍົກບັນທຶກກອງປະຊຸມສະພາອຳນວຍການເລກທີ 9096/LALCO.BOD ລົງວັນທີ 11 ເມສາ 2024. ເງິນປັນຜົນໄດ້ຈ່າຍໃນ ວັນທີ 26 ພະຈິກ 2024, ວັນທີ 19 ທັນວາ 2024 ແລະ ວັນທີ 20 ທັນວາ 2024.

(**) ການເບີກຈ່າຍເງິນປັນຜົນແມ່ນໄດ້ຮັບການອະນຸມັດຈາກສະພາອຳນວຍການ ອີງຕາມຍົກບັນທຶກກອງປະຊຸມສະພາອຳນວຍການເລກທີ 9300/LALCO.BOD ລົງວັນທີ 28 ມີນາ 2025 (ເງິນປັນຜົນແມ່ນ 600 ກີບຕໍ່ຮຸ້ນ). ເງິນປັນຜົນໄດ້ຈ່າຍໃນວັນທີ 27 ມິຖຸນາ 2025.

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ທ່ານ ນາງ Nguyen Thi Huong Mai
ຜູ້ກະກຽມ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ກໍລະກົດ 2026

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	2025 ກີບ	2024 ກີບ
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**234,266,060,471**	**218,129,118,730**
ລັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ	18	3,595,602,269	4,142,394,372
ການປ່ຽນແປງລາຍຈ່າຍເງິນແລະລໍາລັບລັບການເສື່ອມມູນ ຄ່າໜີ້ເສຍ	11	139,924,463,050	58,671,537,269
ລາຍຈ່າຍດອກເບ້ຍ		17,237,314,575	6,116,526,246
ລາຍຮັບດອກເບ້ຍ		(578,341,485,895)	(365,023,556,340)
ກຳໄລສຸດທິຈາກອັດຕາແລກປ່ຽນ		54,375,403,410	(32,953,901,418)
ການປ່ຽນແປງໃນຊັບສິນການດຳເນີນງານ			
ການປ່ຽນແປງສຸດທິໃນເງິນຝາກທະນາຄານ		1,571,846,838	(107,278,568,537)
ການປ່ຽນແປງສຸດທິໃນໜີ້ຕ້ອງຮັບສິນເຊົ່າຊື້		(114,402,323,066)	(353,104,233,680)
ການປ່ຽນແປງສຸດທິໃນຊັບສິນອື່ນໆ		(205,267,764,258)	313,600,637,125
ການປ່ຽນແປງໃນໜີ້ສິນການດຳເນີນງານ			
ການປ່ຽນແປງສຸດທິໃນໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ ກ່ຽວຂ້ອງ		166,373,495	(760,982,313)
ການປ່ຽນແປງສຸດທິໃນໜີ້ສິນອື່ນໆ		5,189,115,924	(2,962,004,217)
ດອກເບ້ຍທີ່ໄດ້ຈ່າຍ		(17,237,314,571)	(6,116,526,246)
ດອກເບ້ຍທີ່ໄດ້ຮັບ		401,226,905,035	371,098,340,809
ອາກອນກຳໄລທີ່ໄດ້ຊຳລະ		(2,939,765,650)	(6,805,973,529)
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**(60,635,568,373)**	**96,752,808,272**
ກິດຈະກຳການລົງທຶນ			
ການຊື້ຊັບສິນຍົດ ແລະ ອຸປະກອນ		(3,692,701,132)	(3,761,029,454)
ກະແສເງິນສົດສຸດທິໃຊ້ໃນກິດຈະກຳການລົງທຶນ		**(3,692,701,132)**	**(3,761,029,454)**
ກິດຈະກຳການ/ຈັດການຈັດຫາເງິນທຶນ			
ການເບີກຖອນເງິນກູ້		602,964,044,280	139,271,000,000
ການຊຳລະຄືນເງິນກູ້		(496,772,972,764)	(3,591,553,167)
ເງິນປັນຜົນທີ່ໄດ້ຈ່າຍ		(36,180,000,000)	(318,376,608,000)
ກະແສເງິນສົດສຸດທິຈາກໃຊ້ໃນກິດຈະກຳການຈັດຫາເງິນທຶນ		**70,011,071,516**	**(182,697,161,167)**
ການປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ		**5,682,802,011**	**(89,705,382,349)**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ		**101,609,825,868**	**191,315,208,217**
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ	14	**107,292,627,879**	**101,609,825,868**

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ທ່ານ ນາງ Nguyen Thi Huong Mai
ຜູ້ກະກຽມ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ກໍລະກົດ 2026

ບໍລິສັດ ລາວ ອາຊຽນ ເຊໍ່າສິນເຊື່ອ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ
ນະວັນທີ ແລະ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

1. ຂໍ້ມູນບໍລິສັດ

ບໍລິສັດ ລາວ ອາຊຽນ ເຊໍ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ລາວ ອາຊຽນ ເຊໍ່າສິນເຊື່ອ ຈຳກັດ, ເປັນ ບໍລິສັດມະຫາຊົນທີ່ດຳເນີນທຸລະກິດໃນ ສປປ ລາວ ອີງຕາມໃບທະບຽນວິສາຫະກິດ ເລກທີ 081/ກຫຄວ ອອກໂດຍ ກົມ ທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 5 ກຸມພາ 2015 ແລະ ໃບທະບຽນວິ ສາຫະກິດສະບັບປັບປຸງລ່າສຸດ ເລກທີ 0222/ກຫຄວ, ລົງວັນທີ 19 ກຸມພາ 2019. ບໍລິສັດໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ (ທຫລ) ລົງວັນທີ 2 ກຸມພາ 2015 ແລະ ສະບັບປັບປຸງລ່າສຸດ ວັນທີ 14 ກັນຍາ 2017 ໃນການ ດຳເນີນກິດຈະກຳໃຫ້ເຊໍ່າສິນເຊື່ອ. ໃນວັນທີ 9 ກັນຍາ 2019, ບໍລິສັດໄດ້ຮັບໃບຢັ້ງຢືນການສະເໜີຂາຍຮຸ້ນຄັ້ງທຳອິດ ຕໍ່ສາທາລະນະ ຄັ້ງທຳອິດ (IPO) ເຊິ່ງອອກໂດຍຫ້ອງການຄະນະກຳມະການຫຼັກຊັບລາວ. ຮຸ້ນຂອງບໍລິສັດທັງໝົດແມ່ນ 301,500,000 ຮຸ້ນ (ພາຍໃຕ້ຊື່ "LALCO") ໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການຕັ້ງແຕ່ວັນທີ 19 ສິງຫາ 2019 ເປັນຕົ້ນ ໄປ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການໃຫ້ເຊໍ່າຊື້ໂດຍການສະໜອງສິນເຊື່ອເຊໍ່າຊື້ສຳລັບລູກຄ້າສ່ວນບຸກຄົນ ແລະ ບໍລິສັດຕ່າງໆເພື່ອຊື້ລົດຈັກ, ລົດໃຫຍ່ ແລະ ອະສັງຫາລິມະຊັບ.

ທຶນຈົດທະບຽນທີ່ຖອກຖ້ວນຂອງບໍລິສັດ ນະວັນທີ 31 ທັນວາ 2025 ແມ່ນ 30,150,000,000 ກີບ (ນະວັນທີ 31 ທັນວາ 2024 ແມ່ນ 30,150,000,000 ກີບ).

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ຊັ້ນ 2, ອາຄານ NNN, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ນະວັນທີ 31 ທັນວາ 2025, ບໍລິສັດມີພະນັກງານທັງໝົດ 370 ຄົນ (2024: 542 ຄົນ).

2. ພື້ນຖານການກະກຽມ

ເອກະສານລາຍງານການເງິນຂອງບໍລິສັດໄດ້ຖືກກະກຽມໃຫ້ສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ ("IFRS") ທີ່ອອກໂດຍສະພາມາດຕະຖານບັນຊີສາກົນ ("IASB").

ບໍລິສັດ ໄດ້ຍັນຫົ່ວຍັນຊີເປັນສະກຸນເງິນລາວ4ໂດລາ ("ໂດລາ") ເຊິ່ງເປັນສະກຸນເງິນຫຼັກທີ່ບໍລິສັດນຳໃຊ້ເຂົ້າໃນລາຍການເດືອນ ໄຫວທຸລະກິດ ແລະ ນຳສະເໜີເອກະສານລາຍງານການເງິນເປັນສະກຸນເງິນລາວກີບ.

ປີການບັນຊີຂອງບໍລິສັດແມ່ນ ເລີ່ມແຕ່ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

3. ຄຳຖະແຫຼງການເອກະສານລາຍງານການເງິນ

ເອກະສານລາຍງານການເງິນຂອງບໍລິສັດຖືກກະກຽມໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ ("IFRS") ທີ່ອອກໂດຍ IASB.

4. ການນຳສະເໜີເອກະສານລາຍງານການເງິນ

ບໍລິສັດໄດ້ນຳສະເໜີໃນລາຍງານຖານະການເງິນ ໂດຍລຽງລຳດັບຕາມສະພາບຄ່ອງ. ຊັບສິນ ແລະ ໜີ້ສິນທາງການເງິນ ແມ່ນໄດ້ຖືກລາຍງານເປັນມູນຄ່າລວມ ແລະ ແຍກບັນຊີສະເພາະໃຜມັນຕ່າງຫາກໃນໃນລາຍງານຖານະການເງິນ. ຊັບສິນ ແລະ ໜີ້ສິນທາງການເງິນຈະຖືກນຳມາຫັກລ້າງກັນ ແລະ ລາຍງານເປັນມູນຄ່າສຸດທິໃນເວລາທີ່ບັນດາພາກສ່ວນທີ່ມີສ່ວນກ່ຽວຂ້ອງ ຫາກມີຄວາມຕ້ອງການຢ່າງຫັກລ້າງ ໃນທຸກໆກໍລະນີຂ້າງລຸ່ມນີ້:

- ທຸລະກິດປົກກະຕິ;
- ເຫດການຜິດນັດຊຳລະ;
- ເຫດການການລົ້ມລະລາຍ ຫຼື ການລົ້ມລະລາຍຂອງບໍລິສັດ ແລະ/ຫຼື ຄູ່ຄ້າຂອງກັນ.

5. ສະຫຼຸບກ່ຽວກັບນະໂຍບາຍການບັນຊີທີ່ສຳຄັນ

ບໍລິສັດຍັງບໍ່ທັນໄດ້ຮັບຮອງເອົາມາດຕະຖານ, ການຕີຄວາມໝາຍ ຫຼື ການປັບປຸງອັນໃດອັນໜຶ່ງທີ່ອອກມາແຕ່ບໍ່ທັນມີຜົນສັກສິດ. ນະໂຍບາຍຊຸ່ມນີ້ ແມ່ນນະໂຍບາຍການບັນຊີທີ່ສຳຄັນທີ່ບໍລິສັດໄດ້ນຳໃຊ້ໃນການກະກຽມເອກະສານລາຍງານການເງິນຂອງຕົນ:

5.1 ການຕີມູນຄ່າເງິນຕາຕ່າງປະເທດ

ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນໄດ້ບັນທຶກເບື້ອງຕົ້ນໂດຍນຳໃຊ້ອັດຕາແລກປ່ຽນນະມື້ທີ່ເຮັດທຸລະກຳ. ຊັບສິນ ແລະ ໜີ້ສິນ ທີ່ເປັນເງິນຕາຕ່າງປະເທດແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຄືນໃນທ້າຍປີ ຕາມອັດຕາແລກປ່ຽນໃນມື້ອອກບົດລາຍງານ (ລາຍລະອຽດອັດຕາແລກປ່ຽນຂອງເງິນຕາຕ່າງປະເທດຫຽບໃສ່ເງິນກີບນະວັນທີ 31 ທັນວາ 2025 ແລະ 31 ທັນວາ 2024 ໄດ້ສະແດງໃນບົດອະທິບາຍເລກທີ 32). ສ່ວນຜິດຕ່ຽງຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງຈາກການຕີມູນຄ່າຂອງບັນດາຊັບສິນ ແລະ ໜີ້ສິນທີ່ເປັນເງິນຕາຕ່າງປະເທດໃນມື້ອອກບົດລາຍງານການເງິນແມ່ນຖືກຮັບຮູ້ໃນໃນລາຍງານຜົນກຳໄລ ຫຼື ຂາດທຶນ.

5.2 ການຮັບຮູ້ລາຍຮັບດອກເບ້ຍ

5.2.1 ວິທີອັດຕາດອກເບ້ຍທີ່ແທ້ຈິງ ("EIR")

ພາຍໃຕ້ IFRS 9, ລາຍຮັບດອກເບ້ຍແມ່ນຖືກຮັບຮູ້ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງສຳລັບການວັດແທກມູນຄ່າຊັບສິນທາງການເງິນຕາມຕົ້ນທຶນຄ່າເສື່ອມ. ເຊັ່ນດຽວກັນກັບລາຍຈ່າຍດອກເບ້ຍກໍຖືກຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງສຳລັບບັນດາໜີ້ສິນທາງການເງິນທີ່ຖືດອງຕາມຕົ້ນທຶນຄ່າເສື່ອມ. ອັດຕາດອກເບ້ຍທີ່ແທ້ຈິງແມ່ນອັດຕາສ່ວນຫຼຸດມູນຄ່າການຮັບເງິນສົດໃນອະນາຄົດທີ່ຖືກຄາດຄະເນຕ່ານອາຍຸທີ່ຄາດການໄວ້ຂອງຊັບສິນ ຫຼື ໜີ້ສິນທາງການເງິນ ຫຼື (ເມື່ອເໝາະສົມ) ເຖິງເປັນຊ່ວງໄລຍະເວລາທີ່ສັ້ນກວ່າ ໂດຍຄິດໄລ່ກັບມູນຄ່າຕາມບັນຊີຂອງຊັບສິນທາງການເງິນນັ້ນ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.2 *ການຮັບຮູ້ລາຍຮັບດອກເບ້ຍ (ຕໍ່)*

5.2.1 *ວິທີອັດຕາດອກເບ້ຍທີ່ແທ້ຈິງ ("EIR") (ຕໍ່)*

ອັດຕາດອກເບ້ຍທີ່ແທ້ຈິງ (ແລະ ຕົ້ນທຶນຄ່າເສື່ອມຂອງຊັບສິນທາງການເງິນ) ແມ່ນຖືກຄິດໄລ່ໂດຍການພິຈາລະນາເອົາຕົ້ນທຶນໃນການເຮັດທຸລະກຳ ແລະ ທຸກໆສ່ວນຫຼຸດ ຫຼື ສ່ວນເພີ່ມ ໃນການໄດ້ມາເຊິ່ງຊັບສິນທາງການເງິນ ພ້ອມກັນດ້ວຍ ຄ່າທຳນຽມ ແລະ ຕົ້ນທຶນຕ່າງໆ ທີ່ເປັນສ່ວນປະກອບລວມເຂົ້າໃນ ອັດຕາດອກເບ້ຍທີ່ແທ້ຈິງ. ບໍລິສັດຮັບຮູ້ລາຍຮັບດອກເບ້ຍທີ່ໄດ້ນຳໃຊ້ອັດຕາຜົນຕອບແທນທີ່ສະແດງໃຫ້ເຫັນເຖິງການຄາດຄະເນທີ່ດີທີ່ສຸດຂອງ ອັດຕາຜົນຕອບແທນຕົ້ນຕໍຫຼາຍທີ່ຄະຫຼວດອາຍຸ ທີ່ຄາດໄວ້ຂອງໜີ້ຕ້ອງຮັບສົນບາຊີ່ຊີ. ສະນັ້ນ, ການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງບັງໄດ້ພິຈາລະນາເຖິງຜົນກະທົບຂອງອັດຕາດອກເບ້ຍທີ່ອາຈະແຕກຕ່າງໃນແຕ່ລະ ຂັ້ນຂອງອາຍຸ ຂອງຊັບສິນທາງການເງິນທີ່ຄາດຄະເນ ແລະ ລັກສະນະອື່ນໆຂອງວົງຈອນຊີວິດຂອງທະລຶດທະພັນ (ເຊິ່ງລວມທັງການຈ່າຍລ່ວງໜ້າ, ດອກເບ້ຍ ແລະ ຄ່າທຳນຽມປັບໃໝ).

ຖ້າຫາກວ່າການຄາດການກະແສເງິນສົດຂອງຊັບສິນ ຫຼື ໜີ້ສິນທາງການເງິນທີ່ເປັນອັດຕາຄົງທີ່ຖືກປັບປຸງໃໝ່ໂດຍເຫດຜົນທີ່ບໍ່ແມ່ນຍ້ອນຄວາມສ່ຽງທາງດ້ານສິນເຊື່ອ. ສະນັ້ນ, ສ່ວນຢ່ຽນແປງໃນກະແສເງິນສົດຕາມສັນຍາໃນອະນາຄົດແມ່ນຖືກຫຼຸດລົງ ທີ່ອັດຕາດອກເບ້ຍທີ່ແທ້ຈິງເດີມກັບການຄັດແກ້ທີ່ນຳມາພາຍຫຼັງຂອງມູນຄ່າຕາມບັນຊີ. ສ່ວນຕ່າງຈາກມູນຄ່າທີ່ຖືຢູ່ກ່ອນໜ້າ ແມ່ນຖືກຍັນຍົກເປັນການຄັດແກ້ທີ່ເປັນລົບ ບວກ ຫຼື ລົບໃສ່ແກ່ມູນຄ່າຕາມບັນຊີຂອງ ຊັບສິນ ຫຼື ໜີ້ສິນທາງການເງິນໃນໃບ ລາຍງານຖານະການເງິນພ້ອມກັນ ການເພີ່ມຂຶ້ນ ຫຼື ຫຼຸດລົງໃນ ລາຍຮັບ/ລາຍຈ່າຍດອກເບ້ຍທີ່ໄດ້ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ.

5.2.2 *ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ແລະ ຄ່າທຳນຽມເບ້ຍ*

ລາຍຮັບສຸດທິຈາກດອກເບ້ຍປະກອບດ້ວຍລາຍຮັບດອກເບ້ຍ ແລະ ລາຍຈ່າຍດອກເບ້ຍທີ່ນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ ແລະ ວິທີອື່ນໆ. ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ແມ່ນຖືກສະແດງແຍກກັນຢູ່ໜ້າໃນລາຍງານຜົນການດຳເນີນງານ.

ລາຍຮັບ/ລາຍຈ່າຍດອກເບ້ຍຄິດໄລ່ນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ, ບໍລິສັດພຽງແຕ່ລວມດອກເບ້ຍຂອງບັນດາເຄື່ອງມືທາງດ້ານການເງິນເຊິ່ງຖືກອະທິບາຍໃນບົດອະທິບາຍເລກທີ 5.2.1 ດ້ານເທິງ.

ບໍລິສັດຄິດໄລ່ລາຍຮັບດອກເບ້ຍຂອງຊັບສິນທາງການເງິນຍົກເວັ້ນບັນດາຊັບສິນທີ່ເສື່ອມມູນຄ່າດ້ານສິນເຊື່ອ ໂດຍການນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງກັບມູນຄ່າຕາມບັນຊີຂອງຊັບສິນທາງການເງິນ.

ເມື່ອຊັບສິນທາງດ້ານການເງິນເກີດເສື່ອມມູນຄ່າທາງດ້ານສິນເຊື່ອ ແລະ ຖືວ່າເປັນ 'ຂັ້ນທີ 3', ບໍລິສັດຄິດໄລ່ລາຍຮັບດອກເບ້ຍໂດຍການນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງຕັກລົບສຸດທິຕົ້ນທຶນຄ່າເສື່ອມມູນຄ່າຂອງຊັບສິນທາງການເງິນ. ຖ້າຫາກວ່າຊັບສິນທາງການເງິນກັບຄຸ່ສະພາບເດີມ ແລະ ບໍ່ມີການເສື່ອມມູນຄ່າທາງດ້ານສິນເຊື່ອອີກຕໍ່ໄປ, ບໍລິສັດສາມາດເກັບຄືນໄປຄິດໄລ່ລາຍຮັບດອກເບ້ຍຕາມພື້ນຖານຈ້ານວນເດີມໄດ້.

5.3 *ລາຍຕົ້ນສຸດທີ່ຈາກການຢຸດຮັບຮູ້ຊັບສິນທາງການເງິນທີ່ວັດແທກການເຕົ້ນທຶນຄ່າເສື່ອມ*

ລາຍຕົ້ນສຸດທີ່ຈາກການຢຸດຮັບຮູ້ຊັບສິນທາງການເງິນທີ່ວັດແທກຕາມຕົ້ນທຶນຄ່າເສື່ອມລວມທັງລາຍຕົ້ນ (ຫຼື ລາຍໄດ້) ທີ່ຮັບຮູ້ຈາກການຂາຍ ຫຼື ການຢຸດຮັບຮູ້ຂອງຊັບສິນທາງດ້ານການເງິນທີ່ຄິດໄລ່ຈາກສ່ວນຕ່າງລະຫວ່າງມູນຄ່າຍັນຍົ (ລວມຄ່າເສື່ອມມູນຄ່າ) ແລະ ລາຍໄດ້ທີ່ໄດ້ຮັບ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.4 *ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ*

5.4.1 *ວັນທີຂອງການຮັບຮູ້*

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດ, ຍົກເວັ້ນໜີ້ຕ້ອງຮັບສັນຍາເຊົ່າຊື້, ຖືກຮັບຮູ້ເບື້ອງຕົ້ນໃນມື້ທີ່ຖືກຊື້ - ຂາຍ ເຊັ່ນ ມື້ທີ່ບໍລິສັດກາຍເປັນພາກສ່ວນໜຶ່ງໃນຍົນທະສັນຍາຂອງເຄື່ອງມືທາງການເງິນ. ນີ້ລວມທັງ "ວິທີການຕົກປົກກະຕິ" - ການຊື້ ຫຼື ການຂາຍຂອງຊັບສິນທາງການເງິນ ທີ່ຕ້ອງການໃຫ້ມີການນຳສົ່ງຕາມກຳນົດເວລາທີ່ໄດ້ຖືກກຳນົດໄວ້ຍ ກົດໝາຍ ຫຼື ລະບຽບການເງິນໃນສະຖານທີ່ຊື້ຂາຍ. ໜີ້ຕ້ອງຮັບສັນຍາເຊົ່າຊື້ ແມ່ນໄດ້ຖືກຮັບຮູ້ໃນເມື່ອມີການໄຫລເງິນ ເພື່ອຊຳລະຕ່າງວັດໝາຍໃຫ້ສັນຍາເຊົ່າຊື້.

5.4.2 *ການວັດແທກຕ່ຳເບື້ອງຕົ້ນຂອງເຄື່ອງມືທາງການເງິນ*

ການຈັດປະເພດຂອງເຄື່ອງມືທາງການເງິນທີ່ຮັບຮູ້ມູນຄ່າເບື້ອງຕົ້ນ ແມ່ນຂຶ້ນກັບໄລຍະເວລາຂອງອາຍຸສັນຍາ ແລະ ຮູບແບບການບໍລິຫານເຄື່ອງມືທາງການເງິນຂອງບໍລິສັດ, ເຊິ່ງໄດ້ອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 5.6.1.1 ແລະ ບົດອະທິບາຍເລກທີ 5.6.1.2. ເຄື່ອງມືທາງການເງິນທັງ ໝົດແມ່ນຖືກຄິດມູນຄ່າໃນເບື້ອງຕົ້ນຕາມມູນຄ່າຍຸດຕິທຳ (ຕາມທີ່ກຳນົດໄວ້ໃນບົດອະທິບາຍເລກທີ 5.6), ຍົກເວັ້ນໃນກໍລະນີຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນທີ່ບັນທຶກໄວ້ໃນ FVTPL, ຄ່າໃຊ້ຈ່າຍໃນທຸລະກຳຈະຖືກເພີ່ມໃສ ຫຼື ຫັກອອກ. ໜີ້ສິນທາງການເງິນແມ່ນວັດແທກໂດຍທຸລະກຳຕົວຈິງ. ເມື່ອມູນຄ່າຍຸດຕິທຳຂອງເຄື່ອງມືທາງດ້ານການເງິນທີ່ຮັບຮູ້ໃນເບື້ອງຕົ້ນແຕກຕ່າງຈາກລາຄາການເຮັດທຸລະກຳ, ບໍລິສັດຈະບັນທຶກກຳໄລ ຫຼື ຂາດທຶນນະມື້ທີ 1, ດັ່ງທີ່ອະທິບາຍຂ້າງລຸ່ມນີ້.

5.4.3 *ກຳໄລ ຫຼື ຂາດທຶນ 'ມື້ທີ 1'*

ເມື່ອລາຄານະມື້ທີການເຄື່ອນໄຫວເກີດຂຶ້ນ ຕ່າງຈາກມູນຄ່າຍຸດຕິທຳຂອງລາຄາຕາມທ້ອງຕະຫຼາດໃນປັດຈຸບັນ ຂອງເຄື່ອງມືການເງິນອັນດຽວກັນ, ຫຼື ອີງຕາມມູນຄ່າທີ່ໄດ້ສ້າງຫຼວດໃນຕະຫຼາດ, ບໍລິສັດຮັບຮູ້ຜົນຕ່າງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸດຕິທຳໃນລາຍຮັບສຸດທ້າຈາກການຄ້າ. ໃນກໍລະນີທີ່ມູນຄ່າຍຸດຕິທຳຖືກກຳນົດຕາມຖານຂໍ້ມູນທີ່ບໍ່ສາມາດສັງເກດໄດ້, ຜົນຕ່າງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າທີ່ໄດ້ຈາກການນຳໃຊ້ເຕັກນິກການຕີມູນຄ່າດັ່ງກ່າວ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານກໍຕໍ່ເມື່ອຂໍ້ມູນທີ່ນຳໃຊ້ສາມາດສັງເກດເຫັນໄດ້ຈະແຈ້ງ ຫຼື ເມື່ອເຄື່ອງມືທາງການເງິນຖືກສະສາງອອກຈາກບັນຊີ.

5.4.4 *ປະເພດການວັດແທກຂອງຊັບສິນ ແລະ ໜີ້ສິນທາງການເງິນ*

ບໍລິສັດຈັດປະເພດຊັບສິນທາງການເງິນທັງໝົດອີງຕາມແບບຈຳລອງທຸລະກິດສຳລັບການບໍລິຫານຊັບສິນ ແລະ ເງື່ອນໄຂສັນຍາຂອງຊັບສິນ, ເຊິ່ງຕີມູນຄ່າດັ່ງລຸ່ມນີ້:

- ຕົ້ນທຶນຄ່າເສື່ອມ, ດັ່ງທີ່ອະທິບາຍໃນບົດອະທິບາຍເລກທີ 5.6.1
- FVOCI (ບໍລິສັດບໍ່ມີຊັບສິນທາງດ້ານການເງິນຈັດຢູ່ໃນ FVOCI);
- FVTPL (ບໍລິສັດບໍ່ມີຊັບສິນທາງດ້ານການເງິນຈັດຢູ່ໃນ FVTPL);

ໜີ້ສິນທາງການເງິນແມ່ນວັດແທກມູນຄ່າໃນຕົ້ນທຶນຄ່າເສື່ອມມູນຄ່າ ຫຼື FVTPL ເມື່ອຖືກຖືເປັນການຊື້ຂາຍ ຫຼື ນຳໃຊ້ການກຳນົດມູນຄ່າຍຸດຕິທຳ (ບໍລິສັດບໍ່ມີໜີ້ສິນທາງການເງິນທີ່ຈັດຢູ່ໃນ FVTPL).

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.5 *ການກຳນົດມູນຄ່າຍຸຕິທຳ*

ບໍລິສັດໄດ້ນຳໃຊ້ເຕັກນິກການປະເມີນລາຄາທີ່ໃຊ້ໂດຍທົ່ວໄປຈາກບັນດາຜູ້ເຂົ້າຮ່ວມຕະຫຼາດເພື່ອກຳນົດລາຄາເຄື່ອງມືທາງດ້ານການເງິນ ແລະ ເຕັກນິກທີ່ໄດ້ສະແດງໃຫ້ເຫັນເພື່ອສະທ້ອນການລາຄາຕະເນທີ່ເຊື່ອຖືໄດ້ຂອງລາຄາທີ່ໄດ້ຮັບໃນການຊື້ຂາຍຕົວຈິງ. ເພື່ອສະແດງໃຫ້ເຫັນວ່າມູນຄ່າຍຸຕິທຳນັ້ນມີທີ່ມາຈາກ, ເຄື່ອງມືທາງດ້ານການເງິນແມ່ນຖືກຈັດປະເພດໂດຍອີງໃສ່ເຕັກນິກການຈັດລຳດັບຂັ້ນຂອງການປະເມີນມູນຄ່າ, ດັ່ງສະຫຼຸບລຸ່ມນີ້:

- ເຄື່ອງມືທາງການເງິນໃນ ລະດັບທີ 1 - ຂໍ້ມູນທີ່ຖືກໃຊ້ໃນການຕີມູນຄ່າແມ່ນ ລາຄາສະເໜີ ຊື້ - ຂາຍທີ່ບໍ່ໄດ້ດັດແກ້ຈາກຕະຫຼາດຊື້ຂາຍຄ່ອງສຳລັບຊັບສິນ ຫຼື ໜີ້ສິນທີ່ຄືກັນທຸກຢ່າງທີ່ບໍລິສັດມີ ນະວັນທີການຕີມູນຄ່າ. ບໍລິສັດຈະພິຈາລະນາວ່າຕະຫຼາດນັ້ນເປັນຕະຫຼາດຊື້ຂາຍຄ່ອງ ຖ້າຫາກວ່າມີກິດຈະກຳການຄ້າທີ່ພຽງພໍເຊິ່ງກ່ຽວພັນກັບຍັງມີມາດ ແລະ ສະໜາຍຄ່ອງຂອງຊັບສິນ ຫຼື ໜີ້ສິນ ທີ່ຄືກັນທຸກຢ່າງ ແລະ ເມື່ອມີການຜຸກມັດ ແລະ ມີລາຄາທີ່ສາມາດໃຊ້ສິດ ແຈ້ງວ່າ ສາມາດທີ່ຈະນຳໃຊ້ໄດ້ ນະວັນທີທີ່ລາຍງານ.
- ເຄື່ອງມືທາງການເງິນໃນ ລະດັບທີ 2 - ຂໍ້ມູນທີ່ຖືກໃຊ້ສຳລັບການຕີມູນຄ່າ ແລະ ມີຄວາມສຳຄັນ ເຊິ່ງມາຈາກຂໍ້ມູນຕະຫຼາດທີ່ໄດ້ສັງເກດ ໂດຍກົງ ຫຼື ທາງອ້ອມ ຕະຫຼອດໄລຍະອາຍຸຂອງເຄື່ອງມື. ຂໍ້ມູນດັ່ງກ່າວນັ້ນແມ່ນປະກອບດ້ວຍ ລາຄາສະ ເໜີຊື້ - ຂາຍສຳລັບຊັບສິນ ຫຼື ໜີ້ສິນທີ່ຄ້າຍຄືກັນໃນຕະຫຼາດຊື້ຂາຍຄ່ອງ, ລາຄາສະເໜີຊື້ - ຂາຍສຳລັບຊັບສິນ ຫຼື ໜີ້ສິນ ທີ່ຄືກັນທຸກຢ່າງ ໃນຕະຫຼາດທີ່ບໍ່ແມ່ນຕະຫຼາດຊື້ຂາຍຄ່ອງ, ແລະ ຂໍ້ມູນທີ່ສາມາດສັງເກດໄດ້ນອກຈາກລາຄາສະເໜີຊື້ - ຂາຍ ເຊັ່ນວ່າ: ອັດຕາດອກເບ້ຍ ແລະ ເສັ້ນອັດຕາຜົນຕອບແທນ, ຄວາມເໜັງຕີງ, ແລະ ການແຜ່ຂະຫຍາຍຂອງສິນເຊື່ອ. ນອກຈາກນີ້, ການດັດແກ້ແມ່ນອາດຈະມີຄວາມຈຳເປັນ ສຳລັບເງື່ອນໄຂ ຫຼື ຖານະຂອງຊັບສິນ ຫຼື ສ່ວນຂະຫຍາຍທີ່ກ່ຽວຂ້ອງກັບລາຍການທີ່ສາມາດປຽບທຽບໄດ້ໃນເຄື່ອງມືທີ່ມີລາຄາ. ເຖິງຢ່າງໃດກໍຕາມ, ຖ້າຫາກວ່າການດັດແກ້ນັ້ນແມ່ນຖືກອີງໃສ່ຂໍ້ມູນທີ່ບໍ່ສາມາດສັງເກດໄດ້ຢ່າງມີໃນສຳຄັນຕໍ່ການຕີມູນຄ່າທັງໝົດ, ບໍລິສັດຈະຈັດບໍລິສັດເຄື່ອງມືນັ້ນເປັນ ລະດັບທີ 3.
- ເຄື່ອງມືທາງດ້ານການເງິນໃນ ລະດັບທີ 3 - ບັນດາເຄື່ອງມືທາງການເງິນເຫຼົ່ານີ້ແມ່ນລວມຢູ່ໃນ ໜຶ່ງ ຫຼື ຫຼາຍຂໍ້ມູນທີ່ບໍ່ສາມາດສັງເກດໄດ້ຢ່າງມີໃນສຳຄັນຕໍ່ການຕີມູນຄ່າໂດຍທັງໝົດ.

ບໍລິສັດປະເມີນການຈັດລະດັບໃນແຕ່ລະໄລຍະການລາຍງານເທື່ອລະເຄື່ອງມື ແລະ ຈັດປະເພດເຄື່ອງມືຄືນເມື່ອຈຳເປັນໂດຍອີງຕາມຂໍ້ເທັດຈິງໃນທ້າຍໄລຍະການລາຍງານ.

5.6 *ຊັບສິນ ແລະ ໜີ້ສິນທາງການເງິນ*

5.6.1 *ໜີ້ຕ້ອງສົ່ງສະຖາບັນການສິນເຊື່ອອື່ນ, ໜີ້ຕ້ອງຮັບການເຊົ່າຊື້ ແລະ ເງິນຝາກໜ້າໃຫ້ກັບພາກສ່ວນທີ່ກ່ຽວຂ້ອງໃນຕົ້ນທຶນຫ່າເລື່ອມມູນຄ່າ*

ບໍລິສັດໄດ້ປະເມີນ ໜີ້ຕ້ອງສົ່ງສະຖາບັນສິນເຊື່ອອື່ນ, ໜີ້ຕ້ອງຮັບການເຊົ່າຊື້ ແລະ ເງິນຝາກໜ້າໃຫ້ກັບພາກສ່ວນທີ່ກ່ຽວຂ້ອງໃນຕົ້ນທຶນຫ່າເລື່ອມມູນຄ່າຖ້າຫາກວ່າຊອດກ່ອງກັບເງື່ອນໄຂລຸ່ມນີ້:

- ຊັບສິນການເງິນແມ່ນຖືເອົາເປັນຮູບແບບທຸລະກິດໂດຍມີຈຸດປະສົງເພື່ອຖືຊັບສິນທາງການເງິນ ເພື່ອເກັບຄືນກະແສເງິນສົດຕາມສັນຍາ ແລະ
- ເງື່ອນໄຂຕາມສັນຍາຂອງຊັບສິນທາງການເງິນກໍ່ໃຫ້ເກີດວັນທີສະເພາະຂອງກະແສເງິນສົດ ໃນການຊຳລະຕົ້ນທຶນ ແລະ ດອກເບ້ຍ (SPPI) ອີງຕາມຍອດຫຼືອຕົ້ນທຶນ.

ລາຍລະອຽດຂອງເງື່ອນໄຂເຫຼົ່ານີ້ແມ່ນໄດ້ລະບຸໄວ້ຢ່າງລຸ່ມນີ້.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.6 *ລັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)*

5.6.1 *ໜີ້ຄ້ຳປະຖັນການສິນເຊື່ອອື່ນ, ໜີ້ຄ້ຳສັນການເຊົ່າຊື້ ແລະ ເງິນຊ່ວຍໜ້າໃຫ້ກັບພາກສ່ວນທີ່ກ່ຽວຂ້ອງໃນຕົ້ນທຶນຄ່າ ເສື່ອມມູນຄ່າ (ຕໍ່)*

5.6.1.1 *ການປະເມີນຮູບແບບທຸລະກິດ*

ບໍລິສັດພິຈາລະນາຮູບແບບທຸລະກິດໃນລະດັບທີ່ສະທ້ອນໄດ້ດີທີ່ສຸດເຖິງວິທີບໍລິຫານກຸ່ມຂອງລັບສິນທາງການເງິນເພື່ອບັນລຸວັດຖຸປະສົງຂອງທຸລະກິດ.

- ຄວາມສ່ຽງທີ່ມີຜົນຕໍ່ກັບການດຳເນີນງານຂອງຮູບແບບທາງທຸລະກິດ (ແລະ ລັບສິນທາງການເງິນທີ່ຖືໃນຮູບແບບທຸລະກິດ) ແລະ ໂດຍສະເພາະແມ່ນວິທີການຈັດການຄວາມສ່ຽງເຫຼົ່ານັ້ນ;
- ວິທີທີ່ຜູ້ບໍລິຫານຂອງທຸລະກິດນັ້ນຖືກຕອບແທນແນວໃດ (ຕົວຢ່າງ ຄ່າຕອບແທນແມ່ນຖືກອີງໃສ່ມູນຄ່າຍຸດຕິທຳຂອງລັບສິນທີ່ໄດ້ບໍລິຫານ ຫຼື ວ່າ ຕາມກະແສເງິນສົດຕາມສັນຍາທີ່ເກັບໄດ້).

ນອກຈາກນັ້ນ ການຄາດຄະເນຄວາມຖີ່, ມູນຄ່າ ແລະ ຊ່ວງເວລາຂອງການຂາຍແມ່ນມີຄວາມສຳຄັນໃນການປະເມີນບໍລິສັດ. ການປະເມີນຮູບແບບທຸລະກິດແມ່ນຖືກອີງໃສ່ສະຖານະການທີ່ຄາດການໄວ້ຢ່າງສົມເຫດສົມຜົນໂດຍທີ່ບໍ່ໄດ້ຄຳນຶງເຖິງສະຖານະການ ໃນ 'ກໍລະນີທີ່ຮ້າຍແຮງທີ່ສຸດ' ຫຼື 'ກໍລະນີທີ່ກົດດັນ'. ຖ້າຫາກວ່າກະແສເງິນສົດຫຼັງຈາກການຂັບຮຸ້ໃນເບື້ອງຕົ້ນແມ່ນຖືກຂັບຮຸ້ໃນທາງທີ່ແຕກຕ່າງຈາກສິ່ງທີ່ຄາດຫວັງໄວ້ຕັ້ງເດີມຂອງບໍລິສັດ, ບໍລິສັດຈະບໍ່ປ່ຽນແປງການຈັດປະເພດຂອງລັບສິນທາງການເງິນທີ່ເຫຼືອຢູ່ທີ່ຖືຄອງໃນຮູບແບບທຸລະກິດ ຖ້າຫາກວ່າຂໍ້ມູນດັ່ງກ່າວຂັດກັນເມື່ອປະເມີນລັບສິນທາງການເງິນທີ່ເກີດໃໝ່ ຫຼື ຊື້ເຂົ້າໃໝ່ໃນອະນາຄົດ.

5.6.1.2 *ການທົດສອບ SPPI*

ຕໍ່ຈາກຂັ້ນຕອນທີ່ສອງຂອງຂັ້ນຕອນການຈັດປະເພດ ບໍລິສັດປະເມີນເງື່ອນໄຂຕາມສັນຍາຂອງລັບສິນທາງການເງິນເພື່ອລະບຸວ່າ ກົງກັບເງື່ອນໄຂຂອງການທົດສອບ SPPI ຫຼື ບໍ່.

'ເງິນຕົ້ນ' ສຳລັບຈຸດປະສົງຂອງການທົດສອບນີ້ແມ່ນຖືກລະບຸໃນມູນຄ່າຍຸດຕິທຳຂອງລັບສິນທາງການເງິນໃນການຂັບຮຸ້ເບື້ອງຕົ້ນ ແລະ ອາດຈະປ່ຽນແປງຕະຫຼອດອາຍຸຂອງລັບສິນທາງການເງິນ (ຕົວຢ່າງ ຖ້າຫາກວ່າມີການຊຳລະເງິນຕົ້ນ ຫຼື ຄັດສ່ວນມູນຄ່າຂອງ ສ່ວນເພີ່ມ/ສ່ວນຫຼຸດ).

ອົງປະກອບທີ່ສຳຄັນທີ່ສຸດຂອງດອກເບ້ຍພາຍໃຕ້ສັນຍາການປ່ອຍກູ້ໂດຍທົ່ວໄປແລ້ວແມ່ນໄດ້ຮັບການພິຈາລະນາມູນຄ່າເງິນຕາມເວລາ ແລະ ຄວາມສ່ຽງດ້ານສິນເຊື່ອ. ເພື່ອທີ່ຈະສ້າງການປະເມີນ SPPI, ບໍລິສັດໄດ້ນຳໃຊ້ການປະເມີນ ແລະ ພິຈາລະນາປັດໃຈທີ່ກ່ຽວຂ້ອງເຊັ່ນວ່າ ສະກຸນເງິນທີ່ລັບສິນທາງການເງິນນັ້ນຖືກກຳນົດ ແລະ ໄລຍະເວລາທີ່ກຳນົດອັດຕາດອກເບ້ຍ.

ໃນທາງກົງກັນຂ້າມ, ເງື່ອນໄຂຂອງສັນຍາທີ່ແນະນຳຄວາມສ່ຽງ ຫຼື ການເໜັງຕີງຫຼາຍກວ່າ ໃນກະແສເງິນສົດຕາມສັນຍາທີ່ບໍ່ກ່ຽວຂ້ອງກັບການຈັດການເງິນກູ້ພື້ນຖານບໍ່ໄດ້ເຮັດໃຫ້ເກີດກະແສເງິນສົດຕາມສັນຍາທີ່ເປັນການຈ່າຍເງິນຕົ້ນ ແລະ ດອກເບ້ຍ ພຽງແຕ່ຈຳນວນທີ່ຄົງຄ້າງ. ໃນກໍລະນີດັ່ງກ່າວ, ລັບສິນທາງດ້ານການເງິນແມ່ນຕ້ອງການທີ່ຈະໄດ້ຮັບການວັດແທກຢ່ທີ FVTPL.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.7 *ການຈັດປະເພດໃໝ່ຊັບສິນທາງການເງິນ*

ບໍລິສັດບໍ່ໄດ້ຈັດປະເພດຊັບສິນທາງດ້ານການເງິນຄືນໃໝ່ຕາມການຄັດຊຸ້ເບື້ອງຕົ້ນຂອງເຂົາເຈົ້າ, ນອກຈາກກໍລະນີພິເສດທີ່ ບໍລິສັດໄດ້ມາ, ກຳຈັດ ຫຼື ຍົກເລີກສາຍທຸລະກິດ. ໜີ້ສິນທາງການເງິນບໍ່ຖືກຈັດປະເພດຄືນໃໝ່.

5.8 *ການຢຸດຄັດຊຸ້ຊັບສິນ ແລະ ໜີ້ສິນທາງການເງິນ*

5.8.1 *ການຢຸດຄັດຊຸ້ຍ້ອນການດັດແກ້ຢ່າງສຳຄັນໃນເງື່ອນໄຂ ແລະ ຂໍ້ກຳນົດ*

ບໍລິສັດຈະຢຸດຄັດຊຸ້ຊັບສິນທາງການເງິນເຊັ່ນວ່າ ໜີ້ຕ້ອງຄັບສິນຍາເຊົ່າຊື້, ເມື່ອຂໍ້ກຳນົດ ແລະ ເງື່ອນໄຂໄດ້ຖືກເຈລະຈາຄືນ ເຊິ່ງຈະກາຍເປັນໜີ້ຕ້ອງຄັບສິນຍາເຊົ່າຊື້ ພ້ອມກັບສ່ວນຕ່າງທີ່ຖືກຄັບຊຸ້ເປັນກຳໄລ ຫຼື ຂາດທຶນຈາກການຢຸດຄັບຊຸ້. ຖ້າຫາກວ່າລາຍຈ່າຍຕ່າງເສື່ອມມູນຄ່າໜີ້ເຮັດບັງບໍ່ທັນໄດ້ຖືກບັນທຶກເທື່ອ. ໜີ້ຕ້ອງຄັບສິນຍາເຊົ່າຊື້ທີ່ຖືກຄັບຊຸ້ໃໝ່ຈະຖືກຈັດປະເພດໃໝ່ໃນຂັ້ນທີ 1 ເພື່ອຈຸດປະສົງການວັດແທກມູນຄ່າ.

ເມື່ອປະເມີນວ່າຈະຢຸດຄັບຊຸ້ແກ່ລຸກຄ້າ ຫຼື ບໍ່ ໂດຍພາຍໃຕ້ເງື່ອນໄຂຕ່າງໆ ບໍລິສັດຈະພິຈາລະນາປັດໃຈດັ່ງລຸ່ມນີ້:

- ການປ່ຽນແປງໃນສະກຸນເງິນຂອງໜີ້ຕ້ອງຄັບການເຊົ່າຊື້;
- ການປ່ຽນແປງໃນຄູ່ສັນຍາ; ແລະ
- ຖ້າຫາກວ່າການດັດແກ້ແມ່ນເປັນດັ່ງບົ່ນເຄືອງມີດັ່ງກ່າວຈະບໍ່ກົງກັບ SPPI ອີກຕໍ່ໄປ.

ຖ້າຫາກວ່າການດັດແກ້ບໍ່ມີຜົນໃນກະແສເງິນສົດທີ່ມີສ່ວນຕ່າງຢ່າງໃຫຍ່ຫຼວງ, ການດັດແກ້ນັ້ນຈະບໍ່ມີຜົນໃນການຢຸດຄັບຊຸ້. ອີງຕາມສ່ວນປ່ຽນແປງສ່ວນຫຼາຍໃນກະແສເງິນສົດໃນອັດຕາດອກເບ້ຍທີ່ແທ້ຈິງເດີມ, ບໍລິສັດຈະບັນທຶກການດັດແກ້ກຳໄລ ຫຼື ຂາດທຶນເມື່ອຂາດທຶນຈາກຕ່າເສື່ອມມູນຄ່າຍັງບໍ່ໄດ້ຖືກບັນທຶກ. ສຳລັບໜີ້ສິນທາງດ້ານການເງິນ, ບໍລິສັດພິຈາລະນາການດັດແກ້ຕ່າງໆ ໂດຍອີງໃສ່ປັດໃຈດ້ານຄຸນນະພາບ ແລະ ຖ້າເຮັດໃຫ້ມີຄວາມແຕກຕ່າງລະຫວ່າງມູນຄ່າສ່ວນຫຼຸດທີ່ຖືກປັບດັດແກ້ ແລະ ມູນຄ່າຕາມບັນຊີເບື້ອງຕົ້ນຂອງໜີ້ສິນທາງດ້ານການເງິນ ຫຼື ຫຼາຍກວ່າສິບສ່ວນຮ້ອຍ (10%). ສຳລັບຊັບສິນທາງການເງິນ, ການປະເມີນນີ້ແມ່ນອີງໃສ່ປັດໃຈດ້ານຄຸນນະພາບ.

ສຳລັບຊັບສິນທາງດ້ານການເງິນທີ່ບໍລິສັດບໍ່ມີຄວາມຄາດຫວັງຢ່າງສົມເຫດສົມຜົນໃນການເກັບຄືນຈຳນວນເງິນທີ່ຍັງຄົງຄ້າງທັງໝົດ, ຫຼື ຕາມອັດຕາສ່ວນຂອງຍອດເຫຼືອດັ່ງກ່າວ, ມູນຄ່າຕາມບັນຊີລວມຂອງຊັບສິນທາງດ້ານການເງິນຈະຫຼຸດລົງ. ເຊິ່ງ ພິຈາລະນາວ່າເປັນການຢຸດຄັບຊຸ້ (ບາງສ່ວນ) ຊັບສິນທາງດ້ານການເງິນ.

5.8.2 *ຊັບສິນທາງການເງິນ*

ຊັບສິນທາງການເງິນ (ຫຼື, ສ່ວນໜຶ່ງຂອງຊັບສິນທາງການເງິນ ຫຼື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກຢຸດຄັບຊຸ້ເປັນຊັບສິນ ກໍ່ຕໍ່ເມື່ອສິດທິທີ່ຈະໄດ້ຮັບກະແສເງິນສົດຈາກຊັບສິນໄດ້ໝົດອາຍຸແລ້ວ. ນອກຈາກນີ້, ບໍລິສັດຍັງຢຸດຄັບຊຸ້ເປັນຊັບສິນ ຖ້າຊັບສິນດັ່ງກ່າວຖືກໂອນ ແລະ ການໂອນດັ່ງກ່າວສອດຄ່ອງກັບເງື່ອນໄຂການຢຸດຄັບຊຸ້.

ບໍລິສັດ ໂອນຊັບສິນຖ້າຫາກວ່າ:

- ບໍລິສັດໄດ້ໂອນກຳມະສິດທັງໝົດໃນການຮັບກະແສເງິນສົດຈາກຊັບສິນ; ຫຼື
- ການຮັກສາສິດທິໃນການຮັບກະແສເງິນສົດ ແຕ່ຕ້ອງມີພັນທະຜູກພັນທີ່ຈະຕ້ອງຈ່າຍກະແສເງິນສົດທີ່ຈະໄດ້ຮັບເຕັມຈຳນວນໂດຍປາສະຈາກການລ່າຊ້າທີ່ສຳຄັນໃຫ້ພາກສ່ວນທີສາມພາຍໃຕ້ສັນຍາ "ການຜ່ຽງຜ່ຳ".

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.8 *ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)*

5.8.2 *ຊັບສິນທາງການເງິນ (ຕໍ່)*

ສັນຍາການສິ່ງຕໍ່ ເປັນການເຮັດທຸລະກຳຜ່ານບໍລິສັດຖືເປັນລາຍການທີ່ເກີດຂຶ້ນ ເມື່ອບໍລິສັດຖືສິດຕາມສັນຍາ ເພື່ອຮັບກະແສເງິນສົດຂອງຊັບສິນທາງການເງິນ (ຊັບສິນເດີມ), ແຕ່ຖືເປັນພັນທະຜູກພັນຕາມສັນຍາທີ່ຈະຕ້ອງຈ່າຍກະແສເງິນສົດໃຫ້ແກ່ກິດຈະການຢ່າງໜ້ອຍໜຶ່ງແຫ່ງ (ຜູ້ຮັບສຸດທ້າຍ), ນະວັນທີ 31 ທັນວາ, ທາງບໍລິສັດບໍ່ມີຊັບສິນທາງການເງິນຕາມການອຽບຂຽງ. ເມື່ອຖືກຕ້ອງຕາມເງື່ອນໄຂທັງສາມຂໍ້ດັ່ງຕໍ່ໄປນີ້:

- ບໍລິສັດບໍ່ມີພັນທະຜູກພັນທີ່ຈະຈ່າຍໃຫ້ແກ່ຜູ້ໄດ້ຮັບສຸດທ້າຍ ຍົກເວັ້ນວ່າ ມີມູນຄ່າເທົ່າທຽມທີ່ເກັບໄດ້ຈາກຊັບສິນເດີມ ເຊິ່ງບໍ່ລວມ ເງິນລ່ວງໜ້າໄລຍະສັ້ນໂດຍອີງກອນພ້ອມກັບສິດເຄັ່ມໃນການເກັບຄືນມູນຄ່າທີ່ໃຫ້ກູ້ຢືມບວກກັບດອກເບ້ຍຄ້າງຈ່າຍ;
- ບໍລິສັດບໍ່ສາມາດຂາຍ ຫຼື ຈຳນຳຊັບສິນເດີມນອກຈາກຫຼັກຊັບໃຫ້ແກ່ຜູ້ໄດ້ຮັບສຸດຫ້າຍສຳລັບພັນທະຜູກພັນທີ່ຈ່າຍກະແສເງິນສົດ; ແລະ
- ບໍລິສັດຈະຕ້ອງສົ່ງກະແສເງິນສົດໃດໆທີ່ຮວບຮວມໃນນາມຂອງຜູ້ໄດ້ຮັບສຸດຫ້າຍໂດຍປາສະຈາກຄວາມລ່າຊ້ຳທີ່ໃຫຍ່ຫຼວງ. ນອກຈາກນີ້, ບໍລິສັດແມ່ນບໍ່ມີສິດທີ່ຈະລົງທຶນຄືນໃນກະແສເງິນສົດດັ່ງກ່າວ, ຍົກເວັ້ນສຳລັບການລົງທຶນໃນເງິນສົດ ຫຼື ທຽບເທົ່າເງິນສົດໃນລະຫວ່າງໄລຍະເວລາສະສາງຍັ້ນສັ້ນຈາກມື້ທີ່ຮວບຮວມເຖິງມື້ທີ່ຮຽກຮ້ອງໃຫ້ມີການມອບແກ່ຜູ້ໄດ້ຮັບສຸດຫ້າຍ ແລະ ດອກເບ້ຍທີ່ໄດ້ຮັບໃນຫຼັກຊັບດັ່ງກ່າວແມ່ນຖືກສົ່ງໃຫ້ຜູ້ໄດ້ຮັບສຸດຫ້າຍ.

ການໂອນຈະສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້ ກໍຕໍ່ເມື່ອ:

- ບໍລິສັດໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນດັ່ງກ່າວ;
  ຫຼື
- ບໍລິສັດບໍ່ໄດ້ໂອນຄວາມສ່ຽງ ແລະ ຮັກສາຄວາມສ່ຽງທັງໝົດໄວ້ ແລະ ຜົນຕອບແທນຂອງຊັບສິນທັງໝົດ, ແຕ່ໄດ້ໂອນການຄວບຄຸມຊັບສິນດັ່ງກ່າວແລ້ວ.

ບໍລິສັດພິຈາລະນາວ່າ ການຄວບຄຸມຈະຖືກໂອນຖ້າຫາກຜູ້ຮັບໂອນມີຄວາມສາມາດໃນການຂາຍຊັບສິນໃຫ້ແກ່ບຸກຄົນທີສາມທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດໃຊ້ຄວາມສາມາດດັ່ງກ່າວໄດ້ພຽງຝ່າຍດຽວ ແລະ ບໍ່ມີຂໍ້ຈຳກັດໃດໆກ່ຽວກັບການໂອນ.

ເມື່ອບໍລິສັດໄດ້ໂອນສິດໃນການຮັບເງິນສົດຈາກຊັບສິນການເງິນ ຫຼື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ ແລະ ບໍ່ໄດ້ໂອນ ຫຼື ບັງຄັບຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼື ໄດ້ໂອນສິດໃນການຄວບຄຸມຊັບສິນ, ຊັບສິນຈະຖືກຮັບຮູ້ໃນເວລາທີ່ບໍລິສັດຍັງມີສ່ວນກ່ຽວຂ້ອງກັບຊັບສິນນັ້ນໆ. ໃນກໍລະນີນີ້ບໍລິສັດຍັງຮັບຮູ້ເປັນໜີ້ສິນທີ່ຕິດພັນ. ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ຕິດພັນແມ່ນ ຖືກປະເມີນບົນພື້ນຖານທີ່ສະທ້ອນເຖິງສິດ ແລະ ພັນທະຂອງບໍລິສັດທີ່ມີຢູ່.

ການສືບຕໍ່ຂອງຮູບແບບຂອງການຄ້ຳປະກັນຕໍ່ຊັບສິນທີ່ໄດ້ໂອນ ແມ່ນຖືກຄິດໄລ່ໃນລະດັບຕ່ຳກວ່າມູນຄ່າເດີມຂອງຊັບສິນ ແລະ ມູນຄ່າສູງສຸດຂອງການພິຈາລະນາວ່າ ບໍລິສັດມີຄວາມສາມາດໃນການຊຳລະໜີ້.

ຖ້າຫາກວ່າການສືບຕໍ່ຂອງຮູບແບບຂອງການສະສົມທີ່ໄດ້ຂຽນ ຫຼື ທາງເລືອກໃນການຊື້ (ຫຼື ທັງສອງ) ຕໍ່ຊັບສິນທີ່ໄດ້ໂອນ, ການສືບຕໍ່ແມ່ນຖືກຄິດໄລ່ໃນມູນຄ່າທີ່ບໍລິສັດຈະຕ້ອງຈ່າຍເພື່ອຊື້ຄືນ. ໃນກໍລະນີທີ່ການສະສົມໃນການຊື້ໃນຊັບສິນທີ່ຖືກຄິດມູນຄ່າເປັນມູນຄ່າຍຸດຕິທຳ, ຂອບເຂດຂອງການສືບຕໍ່ຂອງອົງກອນແມ່ນຖືກຈຳກັດໃນລະດັບຕ່ຳກວ່າມູນຄ່າຍຸດຕິທຳຂອງຊັບສິນທີ່ໄດ້ໂອນ ແລະ ການສະສົມລາຄາທີ່ໄດ້ໃຊ້.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.8 *ການຢຸດເຊົາຮັບຮູ້ສິນຊັບ ແລະ ໜີ້ສິນທາງການເງິນ (ຕໍ່)*

5.8.3 *ໜີ້ສິນທາງການເງິນ*

ໜີ້ສິນທາງການເງິນຈະຖືກຢຸດເຊົາຮັບຮູ້ໃນບັນຊີ ເມື່ອພັນທະຕ່າງໆທີ່ກ່ຽວຂ້ອງໄດ້ສິ້ນສຸດ ຫຼື ໄດ້ມີການຍົກເລີກ ຫຼື ໝົດອາຍຸ. ເມື່ອໜີ້ສິນການເງິນທີ່ມີຢູ່ຖືກແທນທີ່ດ້ວຍໜີ້ສິນອັນໜຶ່ງຈາກເຈົ້າໜີ້ຄົນເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ ຫຼື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ ເຊັ່ນ: ການປ່ຽນແປງ ຫຼື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່. ຜົນຕ່າງຂອງມູນຄ່າຕາມບັນຊີຂອງໜີ້ສິນເດີມ ແລະ ການພິຈາລະນາທີ່ໄດ້ຈ່າຍຈະຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

5.8.4 *ການຫັກລົບສິນທາງການເງິນ ແລະ ໜີ້ສິນທາງການເງິນ*

ຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນຖືກຫັກລົບກັນ ແລະ ມູນຄ່າສຸດທິແມ່ນລາຍງານໃນເອກະສານລາຍງານຖານະການເງິນ ຖ້າໃນປັດຈຸບັນມີສິດທິທາງກົດໝາຍທີ່ບັງຄັບໃຊ້ ເພື່ອຫັກລົບມູນຄ່າທີ່ຮັບຮູ້ໄດ້ ແລະ ມີຈຸດປະສົງທີ່ຈະຊຳລະບົນພື້ນຖານສຸດທິ, ເພື່ອຮັບຮູ້ຊັບສິນ ແລະ ຊຳລະໜີ້ສິນພ້ອມໆກັນ.

ຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນໂດຍທົ່ວໄປແມ່ນ ລາຍງານລວມທັງໝົດໃນເອກະສານລາຍງານຖານະການເງິນ ຍົກເວັ້ນເມື່ອມີເງື່ອນໄຂການຫັກລົບຕາມມາດຕະຖານການລາຍງານບັນຊີສາກົນ.

ເຄື່ອງມືທາງການເງິນອື່ນໆພຽງແຕ່ຖືກຫັກລົບ ແລະ ລາຍງານສຸດທິເມື່ອ, ນອກເໜືອຈາກມີສິດບັງຄັບໃຊ້ທາງກົດໝາຍທີ່ບໍ່ມີເງື່ອນໄຂທີ່ຈະຫັກລົບມູນຄ່າທີ່ຖືກຮັບຮູ້ ໂດຍບໍ່ໄດ້ຂຶ້ນກັບເຫດການໃນອະນາຄົດ ແລະ ບໍລິສັດຍັງຕັ້ງໃຈທີ່ຈະຊຳລະບົນພື້ນຖານສຸດທິໃນທຸກສະພາບການດັ່ງຕໍ່ໄປນີ້:

- ຫຸລະກິດປົກກະຕິ;
- ເຫດການຜິດນັດຊຳລະ;
- ເຫດການການລົ້ມລະລາຍ ຫຼື ການລົ້ມລະລາຍຂອງບໍລິສັດ ແລະ/ຫຼື ຄູ່ຄ້າຂອງຕົນ.

5.9 *ການເຄື່ອນໄຫວຂອງຊັບສິນທາງການເງິນ*

5.9.1 *ຍອດລວມຂອງຫຼັກການໜີ້ທີ່ຄາດວ່າຈະເກີດຈະສູນເສຍ*

ບໍລິສັດນຳໃຊ້ວິທີການຄົດໄລ່ໜີ້ເສຍການເຊົ່າຊື້ທີ່ເກີດຂຶ້ນກັບຂໍ້ມູນທີ່ເປັນການຄາດການລ່ວງໜ້າໃນວິທີການໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ. ບໍລິສັດໄດ້ບັນທຶກເງິນແຂ່ສຳລັບໜີ້ເສຍທາງສິນເຊື່ອທີ່ຄາດວ່າຈະເກີດຂຶ້ນໃນທຸກສິນຍາການເຊົ່າຊື້ ແລະ ໜີ້ສິນຂອງຊັບສິນທາງການເງິນອື່ນໆ ທີ່ບໍ່ໄດ້ລະບຸໄວ້ໃນ FVTPL ໃນພາກສ່ວນນີ້ເອີ້ນລວມ 'ເຄື່ອງມືທາງການເງິນ'.

ເງິນແຂ່ຈາກໜີ້ທີ່ຄາດຄະເນຈະສູນເສຍ (ECL) ແມ່ນອີງຕາມການໜີ້ທີ່ຄາດຄະເນຈະສູນເສຍຕະຫຼອດອາຍຸຂອງຊັບສິນ (ຕະຫຼອດອາຍຸຂອງໜີ້ເສຍທີ່ຄາດວ່າຈະເກີດ), ຍົກເວັ້ນວ່າບໍ່ມີການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງດ້ານສິນເຊື່ອນັບແຕ່ເລີ່ມຕົ້ນ, ເຊິ່ງໃນກໍລະນີນີ້, ເງິນແຂ່ແມ່ນອີງໃສ່ໜີ້ທີ່ຄາດຄະເນຈະສູນເສຍໃນ 12 ເດືອນ ດັ່ງທີ່ໄດ້ລະບຸໃນຍົດອະທິບາຍເລກທີ 5.9.2. ນະໂຍບາຍຂອງບໍລິສັດ ສຳລັບການກຳນົດຖ້າມີການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງສິນເຊື່ອແມ່ນໄດ້ອະທິບາຍໃນຍົດອະທິບາຍເລກທີ 29.1.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.9 *ການເຊື່ອມຊຸມຄ່າຂອງຊັບສິນທາງການເງິນ (ຕໍ່)*

5.9.1 *ຍອດລວມຂອງຫຼັກການໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ (ຕໍ່)*

ໜີ້ທີ່ຄາດຄະເນຈະສູນເສຍຂອງ 12 ເດືອນ ແມ່ນສ່ວນໜຶ່ງຂອງອາຍຸຂອງໜີ້ເສຍທີ່ຄາດວ່າຈະເກີດທີ່ໄດ້ສະແດງເຖິງໜີ້ທີ່ຄາດຄະເນຈະສູນເສຍ ທີ່ມີຜົນມາຈາກການຜິດນັດຊຳລະໃນເຄື່ອງມືທາງການເງິນທີ່ເປັນໄປໄດ້ພາຍໃນ 12 ເດືອນຫຼັງຈາກວັນທີລາຍງານ.

ທັງໜີ້ທີ່ຄາດຄະເນຈະສູນເສຍ ຕະຫຼອດອາຍຸ ແລະ ໜີ້ເສຍທີ່ຄາດວ່າຈະເກີດ ຂອງ 12 ເດືອນ ແມ່ນຖືກຄິດໄລ່ບົນພື້ນຖານການເກັບໜີ້ຄ້າງຮັບຈາກການເຊົ່າຊື້ຂອງບໍລິສັດລີງໃນໃບລາຍງານການເງິນຂອງບໍລິສັດ. ບໍລິສັດຈັດແບ່ງລູກໜີ້ຄ້າງຮັບຈາກການເຊົ່າຊື້ແມ່ນອີງຕາມປະເພດຂອງຊະນິດຕະພັນ.

ບໍລິສັດໄດ້ສ້າງນະໂຍບາຍເພື່ອທີ່ຈະປະຕິບັດການປະເມີນ ໃນແຕ່ລະຫ້າຍຂອງໄລຍະການລາຍງານ ວ່າຄວາມສ່ຽງສິນເຊື່ອຂອງເຄື່ອງມືທາງດ້ານການເງິນມີການເພີ່ມຂຶ້ນຢ່າງສຳຄັນ ຫຼື ບໍ່ ນັບຕັ້ງແຕ່ການຮັບຮູ້ຄັ້ງທຳອິດ, ໂດຍການພິຈາລະນາສ່ວນປ່ຽນແປງໃນຄວາມສ່ຽງຂອງການຜິດນັດຊຳລະທີ່ເກີດຂຶ້ນຕະຫຼອດອາຍຸຂອງເຄື່ອງມືທາງດ້ານການເງິນທີ່ເຫຼືອຢູ່. ເຊິ່ງໄດ້ອະທິບາຍລະອຽດເພີ່ມເຕີມໃນບົດອະທິບາຍເລກທີ 29.1.

ໂດຍອີງຕາມຂັ້ນຕອນທາງເທິງ, ບໍລິສັດໄດ້ຈັດກຸ່ມໜີ້ຕ້ອງຮັບການເຊົ່າຊື້ ແລະ ຊັບສິນທາງການເງິນເປັນ ຂັ້ນທີ 1, ຂັ້ນທີ 2, ຂັ້ນທີ 3 ເຊິ່ງໄດ້ອະທິບາຍດັ່ງລຸ່ມນີ້:

- ຂັ້ນທີ 1 ເມື່ອຊັບສິນທາງການເງິນຖືກຮັບຮູ້ຄັ້ງທຳອິດ, ບໍລິສັດຮັບຮູ້ເງິນແຂ່ຽງໃສ່ໜີ້ທີ່ຄາດຄະເນຈະສູນເສຍ ຂອງ 12 ເດືອນ. ຊັບສິນທາງການເງິນທີ 1 ຍັງໄດ້ລວມເອົາສິ່ງທີ່ເອື້ອອຳນວຍຄວາມສ່ຽງສິນເຊື່ອໄດ້ປັບປຸງ ແລະ ໜີ້ຕ້ອງຮັບການເຊົ່າຊື້ໄດ້ຖືກຈັດບໍລິສັດຄືນໃໝ່ຈາກ ຂັ້ນທີ 2.
- ຂັ້ນທີ 2 ເມື່ອຊັບສິນທາງການເງິນໄດ້ສະແດງການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງສິນເຊື່ອນັບຕັ້ງແຕ່ເລີ່ມປ່ອຍສິນເຊື່ອ, ບໍລິສັດບັນທຶກເງິນແຂ່ຽງລ້ຽ ECL ຕະຫຼອດອາຍຸ. ຊັບສິນທາງການເງິນ ຂັ້ນທີ 2 ແມ່ນຍັງໄດ້ລວມເອົາສິ່ງທີ່ເອື້ອອຳນວຍຄວາມສ່ຽງສິນເຊື່ອໄດ້ປັບປຸງ ແລະ ຊັບສິນທາງການເງິນໄດ້ຖືກຈັດບໍລິສັດຄືນໃໝ່ຈາກ ຂັ້ນທີ 3.
- ຂັ້ນທີ 3 ຊັບສິນທາງການເງິນທີ່ຖືກພິຈາລະນາດ່າເສື່ອມສິນເຊື່ອ (ດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 29.1). ບໍລິສັດບັນທຶກເງິນແຂ່ຽງໜີ້ທີ່ຄາດວ່າຈະສູນເສຍຕະຫຼອດອາຍຸ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.9 *ການເຊື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)*

5.9.2 *ການຄິດໄລ່ໜີ້ສູນເສຍທີ່ຄາດວ່າຈະເກີດ*

ບໍລິສັດຄິດໄລ່ໜີ້ທີ່ຄາດຄະເນຈະສູນເສຍໂດຍອີງໃສ່ສະຖານະການຄວາມອາດຈະເປັນໄປໄດ້ແບບຖ່ວງນ້ຳໜັກ 3 ກໍລະນີ ເພື່ອຕີມູນຄ່າຄວາມຂາດແຄນເງິນສົດທີ່ຄາດການໄວ້, ອັດຕາສ່ວນຫຼຸດໂດຍປະມານຕໍ່ອັດຕາດອກເບ້ຍທີ່ແທ້ຈິງ. ການຂາດແຄນເງິນສົດແມ່ນສ່ວນຕ່າງລະຫວ່າງກະແສເງິນສົດທີ່ຄົບກຳນົດຕາມສັນຍາ ແລະ ກະແສເງິນສົດທີ່ບໍລິສັດຄາດວ່າຈະໄດ້ຮັບ.

ກົນໄກຂອງການຄິດໄລ່ ໜີ້ທີ່ຄາດຄະເນຈະສູນເສຍແມ່ນຖືກສະແດງຢູ່ດ້ານລຸ່ມ ແລະ ມີອົງປະກອບທີ່ສຳຄັນດັ່ງລຸ່ມນີ້:

- ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະ ("PD") — ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະແມ່ນການຄາດຄະເນຄວາມອາດຈະເປັນໄປໄດ້ຂອງການຜິດນັດຊຳລະໃນຕະຫຼອດຊ່ວງເວລາທີ່ກຳນົດ. ການຜິດນັດຊຳລະອາດຈະເກີດຂຶ້ນໃນຊ່ວງເວລາທີ່ແນ່ນອນໃດໜຶ່ງຕະຫຼອດໄລຍະການປະເມີນ, ຖ້າຫາກວ່າສິ່ງທີ່ເອື້ອອຳນວຍບໍ່ໄດ້ຖືກຢຸດຢັ້ງຊຸ້ໃນກ່ອນໜ້າ ແລະ ຍັງມີຢູ່ໃນກຸ່ມຫຼຸ້ຫຼຸ້ຍ. ແນວຄວາມຄິດຂອງຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 29.1.
- ຍອດໜີ້ເມື່ອຜິດນັດຊຳລະ ("EAD") — ຍອດໜີ້ເມື່ອຜິດນັດຊຳລະ ແມ່ນການປະມານການຍອດໜີ້ໃນວັນທີ່ຜິດນັດຊຳລະໃນອະນາຄົດ, ໂດຍພິຈາລະນາສ່ວນປ່ຽນແປງທີ່ຄາດການໄວ້ໃນຍອດໜີ້ຫຼັງຈາກມື້ລາຍງານ ເຊິ່ງລວມເອົາການຊຳລະຄືນທັງເງິນຕົ້ນ ແລະ ດອກເບ້ຍ, ບໍ່ວ່າຈະຕາມກຳນົດໃນສັນຍາ ຫຼື ບໍ່ກໍຕາມ, ການປົກຖອນທີ່ຄາດການໄວ້, ແລະ ດອກເບ້ຍຄ້າງຈ່າຍຈາກການຜິດນັດຊຳລະ. EAD ແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 29.1.
- ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະ ("LGD") — ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະແມ່ນການປະເມີນຄວາມເສຍຫາຍທີ່ມາຈາກກໍລະນີທີ່ການຜິດນັດຊຳລະເກີດຂຶ້ນໃນເວລາທີ່ກຳນົດ. ເຊິ່ງຂຶ້ນກັບສ່ວນຕ່າງລະຫວ່າງກະແສເງິນສົດຕາມສັນຍາທີ່ຄົບກຳນົດ ແລະ ບັນດາມູນຄ່າຕ່າງໆ ທີ່ຜູ້ໃຫ້ກູ້ຢືມຄາດວ່າຈະໄດ້ຮັບ, ເຊິ່ງລວມຈາກການຍຶດຊັບດ້ານຫຼັກຊັບຄ້ຳປະກັນຕ່າງໆ. ໂດຍປົກກະຕິ LGD ແມ່ນຖືກສະແດງເປັນອັດຕາສ່ວນຮ້ອຍຂອງ EAD. LGD ແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 29.1.

ເມື່ອມີການຄາດຄະເນໜີ້ທີ່ຄາດຄະເນຈະສູນເສຍ, ບໍລິສັດຈະຄິດໄລ່ສະເລ່ຍຖ່ວງນ້ຳໜັກຂອງການຄາດຄະເນຕາມເສດຖະກິດມະຫາພາກຈາກແຫຼ່ງຂໍ້ມູນພາຍນອກ. ຈາກນັ້ນ, ບໍລິສັດໄດ້ພິຈາລະນາພິນກະທົບຂອງປັດໃຈເສດຖະກິດໄປສູ່ PD ແບບວິເຈອນໂດຍນຳໃຊ້ດຸນພິນິດຂອງຜູ້ຊ່ຽວຊານ.

ລາຍຈ່າຍຄ່າເຊື່ອມມູນຄ່າ ແລະ ການສູນເສຍຈະຖືກບັນທຶກ ແລະ ສະເໜີແຍກຕ່າງຫາກຈາກການຕັດແກ້ກຳໄລ ຫຼື ຂາດທຶນ ທີ່ເກີດຈາກການຕັດແກ້ມູນຄ່າຕາມບັນຊີລວມຂອງຊັບສິນທາງການເງິນ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.9 *ການເຄື່ອນໄຫວຂອງລູກໜີ້ທາງການເງິນ (ຕໍ່)*

5.9.2 *ການຄິດໄລ່ໜີ້ທີ່ຄາດຄະເນຈະສູນເສຍ (ຕໍ່)*

ກົນໄກຂອງວິທີຄິດໄລ່ໜີ້ທີ່ຄາດຄະເນຈະສູນເສຍແມ່ນຖືກສະຫຼຸບດັ່ງລຸ່ມນີ້:

- ຂັ້ນທີ 1 ໜີ້ທີ່ຄາດຄະເນຈະສູນເສຍ 12 ເດືອນແມ່ນຖືກຄິດໄລ່ເປັນສ່ວນໜຶ່ງຂອງ ໜີ້ທີ່ຄາດຄະເນຈະສູນເສຍຕະຫຼອດອາຍຸຂອງລູກໜີ້ສະແດງເຖິງ ໜີ້ທີ່ຄາດຄະເນຈະສູນເສຍ ທີ່ມີເຫດມາຈາກເຫດການການຜິດນັດຊຳລະໃນເຄື່ອງມືທາງດ້ານການເງິນທີ່ເປັນໄປໄດ້ໃນ 12 ເດືອນຫຼັງຈາກມື້ລາຍງານ. ບໍລິສັດຄຳນວນເງິນແຂ ໜີ້ທີ່ຄາດຄະເນຈະສູນເສຍ 12 ເດືອນໂດຍອີງໃສ່ການຄາດການການຜິດນັດຊຳລະທີ່ເກີດຂຶ້ນໃນ 12 ເດືອນຫຼັງຈາກມື້ລາຍງານ. ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະ 12 ເດືອນທີ່ຄາດການໄວ້ນີ້ແມ່ນຖືກນຳໃຊ້ເພື່ອຄາດຄະເນ EAD ແລະ ຄູນກັບ LGD ທີ່ຄາດການໄວ້ ແລະ ຫຼຸດໂດຍອັດຕາດອກເບ້ຍທີ່ແທ້ຈິງເດີມໂດຍປະມານ. ການຄຳນວນນີ້ແມ່ນຖືກສ້າງຂຶ້ນສຳລັບແຕ່ລະກໍລະນີ ຕ້ົງ 3 ກໍລະນີຕ້ົງທີ່ໄດ້ອະທິບາຍຂ້າງເທິງ.
- ຂັ້ນທີ 2 ເມື່ອໜີ້ຕ້ອງຮັບການເຊົ່າຊື້ໄດ້ສະແດງໃຫ້ເຫັນເຖິງການເພີ່ມຂຶ້ນຂອງຄວາມສ່ຽງສິນເຊື່ອຢ່າງມີຄວາມສຳຄັນ ຕ້ັ້ງແຕ່ເລີ່ມຕົ້ນ, ບໍລິສັດຄັບທຶກເງິນແຂໜີ້ທີ່ຄາດຄະເນຈະສູນເສຍຕະຫຼອດອາຍຸຂອງລູກໜີ້. ກົນໄກນີ້ແມ່ນຄ້າຍຄືກັບທີ່ໄດ້ອະທິບາຍຂ້າງເທິງທີ່ລວມເຖິງການນຳໃຊ້ຫຼາຍສ່ວນປັ ແຕ່ວ່າ PDs ແລະ LGDs ແມ່ນຖືກຄາດຄະເນຕະຫຼອດອາຍຸຂອງເຄື່ອງມື. ການຂາດແຄນເງິນສົດທີ່ຄາດການໄວ້ແມ່ນຖືກຫຼຸດລ່ຳໂດຍອັດຕາດອກເບ້ຍທີ່ແທ້ຈິງເດີມໂດຍປະມານ.
- ຂັ້ນທີ 3 ສຳລັບໜີ້ຕ້ອງຮັບການເຊົ່າຊື້ທີ່ພິຈາລະນາວ່າມີການເຄື່ອນໄຫວດ້ານສິນເຊື່ອ, ບໍລິສັດຮັບຮູ້ລາຍຈ່າຍໜີ້ທີ່ຄາດຄະເນຈະສູນເສຍຕະຫຼອດອາຍຸສຳລັບໜີ້ຕ້ອງຮັບການເຊົ່າຊື້ເຫຼົ່ານີ້. ວິທີນີ້ແມ່ນຄ້າຍຄືກັບ ຂັ້ນທີ 2 ພ້ອມກັບ PD ທີ່ຕ້ັ້ງໄວ້ທີ 100%.

5.9.3 *ຂໍ້ມູນທີ່ເປັນການຄາດການລ່ວງໜ້າ*

ໃນແບບຈຳລອງໜີ້ທີ່ຄາດຄະເນຈະສູນເສຍ, ບໍລິສັດໄດ້ນຳໃຊ້ຂໍ້ມູນທີ່ເປັນການຄາດການລ່ວງໜ້າເປັນຂໍ້ມູນທາງເສດຖະກິດ ເຊັ່ນ:

- ອັດຕາການເຕີບໂຕຂອງ GDP
- ອັດຕາແລກປ່ຽນເງິນຕາຕ່າງປະເທດ

ການປ້ອນຂໍ້ມູນ ແລະ ແບບຈຳລອງທີ່ໄດ້ນຳໃຊ້ໃນການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນອາດຈະບໍ່ກຳໄດ້ມີການປະເມີນທັງໝົດຂອງຕະຫຼາດໃນວັນທີຂອງເອກະສານລາຍງານທາງດ້ານການເງິນໄດ້ຕະຫຼອດ. ເພື່ອຫຳຈະສະທ້ອນໃຫ້ເຫັນສິ່ງເຫຼົ່ານີ້, ຈ້ຶ່ງມີການດັດແກ້ແບບຄຸນນະພາບ ຫຼື ການຫັນຊ້ອນ ເຊ້ິ່ງເປັນການດັດແກ້ຊ້ຶ່ວຄາວເມື່ອຂ້ອນຂ້າງເຫຼົ່ານ້ັ້ນຖືວ່າມີຜົນຢ່າງສຳຄັນ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.10 *ການຕັ້ງອອກ*

ຊັບສິນທາງດ້ານການເງິນຖືກຕັ້ງອອກ ເມື່ອບໍລິສັດບໍ່ມີຄວາມຄາດຄະເນທີ່ສົມເຫດສົມຜົນທີ່ຈະກູ້ຄືນຊັບສິນທາງດ້ານການເງິນ. ຖ້າຈຳນວນເງິນທີ່ຈະຖືກຕັ້ງອອກແມ່ນຫຼາຍກ່ວາເງິນແຮສຳລັບການເສື່ອມມູນຄ່າທີ່ເຂົ້າບັນຊີ, ໃນເບື້ອງຕົ້ນໃຫ້ຖືກ ຂ່ອນຕ່າງເປັນຂ່ອນເພີ່ມຈາກຄ່າເສື່ອມທີ່ນຳໃຊ້ກັບມູນຄ່າລວມຕາມບັນຊີລວມ. ທຸກໆການກູ້ຄືນທີ່ເກີດຕາມຫຼັງແມ່ນ ໃຫ້ລວມເຂົ້າກັບລາຍຮັບອື່ນໆ.

5.11 *ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດທີ່ກ່າວເຖິງໃນໃບລາຍງານຖານະການເງິນປະກອບມີ ເງິນຝາກປະຫະນາຄານ ກຳນົດ 3 ເດືອນ ຫຼື ຕ່ຳກ່ວານັ້ນ ແລະ ເງິນສົດໃນຄັງ.

5.12 *ຊັບສິນຍັດ ແລະ ອຸປະກອນ*

ຊັບສິນຍັດ ແລະ ອຸປະກອນ ແມ່ນໄດ້ລາຍງານ ຕາມຕົ້ນທຶນຂອງການບໍ່ມີການມີຕໍ່ມື້ລົບຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມ ສະສົມ. ການປ່ຽນແປງຂອງອາຍຸການນຳໃຊ້ ແມ່ນໄດ້ລົງບັນຊີຕາມການປ່ຽນແປງຂອງໄລຍະການເສື່ອມຄ່າ ຫຼື ວິທີຫັກຄ່າ ເສື່ອມຕາມຄວາມເໝາະສົມ ແລະ ເຮັດໃຫ້ມີການປ່ຽນແປງຕາມການຄາດຄະເນທາງການບັນຊີ.

ຄ່າຫຼຸ້ຍຫ້ຽນຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າຫຼຸ້ຍຫ້ຽນແບບສະເໜີຕົວ ເພື່ອຫຼຸດຕົ້ນທຶນຂອງຊັບສົມບັດ ແລະ ອຸປະກອນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ.

ອາຍຸການນຳໃຊ້ທີ່ໄດ້ຄາດຄະເນແມ່ນມີດັ່ງລຸ່ມນີ້:

ອຸປະກອນຄອມພິວເຕີ	20%
ເຟີນີເຈີ ແລະ ສິ່ງຕິດຕັ້ງ	20%
ພາຫະນະ	20%

ຊັບສິນ ແລະ ອຸປະກອນ ຈະບໍ່ຖືກຮັບຮູ້ເມື່ອມີການສະສາງອອກ ຫຼື ເມື່ອເຫັນວ່າບໍ່ມີຜົນປະໂຫຍດຕໍ່ທຸລະກິດໃນອະນາຄົດ ຈາກການນຳໃຊ້ຊັບສົມບັດ ແລະ ອຸປະກອນດັ່ງກ່າວ. ກຳໄລ ຫຼື ຂາດທຶນທີ່ເກີດຈາກການສະສາງຊັບສົມບັດ (ຄິດໄລ່ໄດ້ ລະຫວ່າງມູນຄ່າສະສາງອອກ ແລະ ມູນຄ່າຍັງເຫຼືອຂອງຊັບສົມບັດ) ແມ່ນຖືກຮັບຮູ້ເປັນ 'ລາຍຮັບຈາກການດຳເນີນງານອື່ນໆ' ໃນໃບລາຍງານຜົນກຳໄລ ຫຼື ຂາດທຶນຂອງປີທີ່ຊັບສົມບັດໄດ້ຖືກສະສາງອອກ.

5.13 *ການເຊົ່າ*

ບໍລິສັດປະເມີນໃນສັນຍາໃນເບື້ອງຕົ້ນວ່າ ສັນຍານັ້ນເປັນສັນຍາເຊົ່າ ຫຼື ປະກອບດ້ວຍການເຊົ່າ ຫຼື ບໍ່ ໂດຍທີ່, ຖ້າສັນຍາສະແດງໃຫ້ເຫັນ ໃນການຄວບຄຸມການນຳໃຊ້ຊັບສິນທີ່ໄດ້ລະບຸໄວ້ໃນໄລຍະເວລາໃດໜຶ່ງໂດຍການແລກປ່ຽນເພື່ອພິຈາລະນາ.

5.13.1 *ບໍລິສັດໃນຖານະເປັນຜູ້ເຊົ່າ*

ບໍລິສັດນຳໃຊ້ວິທີການຍັບຍັ້ງ ແລະ ວັດແທກແບບດ່ຽວ ສຳລັບສັນຍາເຊົ່າທັງໝົດ ຍົກເວັ້ນການເຊົ່າໄລຍະສັ້ນ ແລະ ການເຊົ່າ ຊັບສິນທີ່ມີມູນຄ່າຕ່ຳ. ບໍລິສັດຮັບຮູ້ໜີ້ສິນການສັນຍາເຊົ່າເພື່ອດຳເນີນການຊຳລະຄ່າເຊົ່າ ແລະ ສິດນຳໃຊ້ຊັບສິນທີ່ກຳນົດການ ນຳໃຊ້ຊັບສິນທີ່ກ່ຽວຂ້ອງ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.13 *ການເຊົ່າ (ຕໍ່)*

5.13.1 *ບໍລິສັດໃນຖານະເປັນຜູ້ເຊົ່າ (ຕໍ່)*

ສິດນຳໃຊ້ຊັບສິນ

ບໍລິສັດຮັບຮູ້ສິດນຳໃຊ້ຊັບສິນໃນວັນທີເລີ່ມຕົ້ນຂອງການເຊົ່າ (ຕົວຢ່າງ, ວັນທີທີ່ຊັບສິນທີ່ກ່ຽວຂ້ອງສາມາດນຳໃຊ້ໄດ້). ສິດນຳຊັບສິນແມ່ນຖືກວັດແທກເປັນຕົ້ນທຶນ, ເຊິ່ງຈະມີການຫຼຸດລົງດ້ວຍ ການສຸນເສຍຈາກຄ່າເສື່ອມຄ່າສູ້ມຄ່າ ແລະ ຄ່າເສື່ອມລະລົມ ແລະ ດັດແກ້ເພື່ອປະເມີນຄືນໜີ້ສິນການເຊົ່າ. ຕົ້ນທຶນສິດນຳໃຊ້ຊັບສິນລວມມີ ມູນຄ່າໜີ້ສິນທີ່ຖືກຮັບຮູ້, ຄ່າໃຊ້ຈ່າຍໂດຍກົງໃນເບື້ອງຕົ້ນທີ່ເກີດຂຶ້ນ, ແລະ ການຊຳລະຄ່າເຊົ່າ ນະ ຫຼື ກ່ອນວັນທີເລີ່ມຕົ້ນສັນຍາໂດຍໄດ້ຮັບເງື່ອນໄຂກະຕຸ້ນຈາກການເຊົ່າທີ່ໜ້ອຍກວ່າ. ສິດການນຳໃຊ້ຊັບສິນແມ່ນມີການຫຼຸ້ຍຫ້ຽນໂດຍພື້ນຖານການຄິດໄລ່ແບບສະເໜີຕົວໃນໄລຍະສັນຍາເຊົ່າ.

ໜີ້ສິນການສັນຍາເຊົ່າ

ນະວັນທີເລີ່ມຕົ້ນຂອງການເຊົ່າ, ບໍລິສັດໄດ້ຮັບຮູ້ໜີ້ສິນການເຊົ່າທີ່ໄດ້ວັດແທກເປັນໃນມູນຄ່າປັດຈຸບັນຂອງການຊຳລະຄ່າເຊົ່າທີ່ຈະເກີດຂຶ້ນໃນໄລຍະສັນຍາເຊົ່າ. ການຊຳລະຄ່າເຊົ່າລວມມີການຈ່າຍແບບຄົງທີ່ (ບໍ່ມີເງື່ອນໄຂກະຕຸ້ນຈາກການເຊົ່າທີ່ຈະໄດ້ຮັບ). ການຊຳລະຄ່າເຊົ່າແບບບໍ່ຄົງທີ່ ທີ່ຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ຈຳນວນທີ່ຄາດວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເຫຼືອ. ການຊຳລະຄ່າເຊົ່າບັ້ງລວມມີ ລາຄາທີ່ນຳໃຊ້ຂອງທາງເລືອກການຊື້ຢ່າງສົມເຫດສົມຜົນທີ່ແນ່ນອນ ທີ່ຈະປະຕິບັດໂດຍບໍລິສັດ ແລະ ການຊຳລະຄ່າປັບໃໝສຳລັບການຍຸດຕິການເຊົ່າ, ຖ້າວ່າສັນຍາເຊົ່າສະທ້ອນໃຫ້ເຫັນການໃຊ້ສິດໃນການຍຸດຕິ. ການຊຳລະຄ່າເຊົ່າທີ່ບໍ່ຄົງທີ່ໂດຍບໍ່ຂຶ້ນກັບດັດສະນີ ຫຼື ອັດຕາ ແມ່ນຖືກຮັບຮູ້ເປັນລາຍຈ່າຍໃນໄລຍະເວລາທີ່ມີເຫດການ ຫຼື ເງື່ອນໄຂທີ່ກໍ່ໃຫ້ເກີດການຊຳລະເກີດຂຶ້ນ.

5.14 *ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ*

ບໍລິສັດປະເມີນນະບໍ່ສ້າງບົດລາຍງານ ວ່າມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອຄັດການທົດສອບການເສື່ອມຄ່າຊັບສິນປະຈຳປີຕາມທີ່ໄດ້ກຳນົດ ບໍລິສັດປະເມີນຈຳນວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກມູນຄ່າທີ່ສູງກວ່າລະຫວ່າງ ມູນຄ່າຍຸດຕິທຳຂອງຊັບສິນ ຫຼື ມູນຄ່າຍຸດຕິທຳຂອງຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້, ເມື່ອຍອດບົກມາ ຂອງຊັບສິນ ຫຼື ມູນຄ່າຂອງ CGU ຫຼາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເສື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫຼຸດລົງ ເພື່ອໃຫ້ໄດ້ມູນຄ່າປັດຈຸບັນໂດຍການນຳໃຊ້ອັດຕາສ່ວນຫຼຸດກ່ອນອາກອນ ທີ່ສະທ້ອນຕໍ່ການປະເມີນມູນຄ່າຕາມທ້ອງຕະຫຼາດໃນປັດຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸດຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດໂດຍການຕີມູນຄ່າທີ່ຫຼາກຫຼາຍ, ລາຄາຮຸ້ນທີ່ສະເໜີຂາຍສຳລັບບໍລິສັດທີ່ຂາຍຕໍ່ໄປ ຫຼື ຕົວຊີ້ບອກມູນຄ່າຍຸດຕິທຳອື່ນໆ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.14 *ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ (ຕໍ່)*

ສຳລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສິ້ນປີລາຍງານ ເພື່ອເບິ່ງວ່າອາດຈະມີຄວາມຊຸ້ຍອກເຖິງການເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫຼຸດລົງ. ຖ້າຫາກມີຄວາມຊຸ້ຍອກ, ບໍລິສັດຈະຄາດຄະເນ ຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ. ການເສື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນ ມີການປ່ຽນແປງ ໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປັນຄືນແມ່ນຖືກກຳນົດຂຶ້ນ. ສະນັ້ນ, ຍອດຍົກມາຂອງຊັບສິນແມ່ນບໍ່ເກີນມູນຄ່າທີ່ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດ ຍົກມາທີ່ຖືກກຳນົດລົບໃຫ້ຄ່າຫຼຸ້ຍຫ້ຽນ, ບໍ່ມີຄ່າເສື່ອມຂອງຊັບສິນໃນປີຜ່ານມາ. ການປັນຄືນແມ່ນຖືກຮັບຮູ້ໃນໃບລາຍງານຜົນກຳໄລ ຫຼື ຂາດທຶນ.

5.15 *ຜົນປະໂຫຍດຂອງພະນັກງານ*

ຜົນປະໂຫຍດຂອງພະນັກງານຫຼັງອອກການ

ຜົນປະໂຫຍດພາຍຫຼັງອອກການ ແມ່ນຈະຖືກຈ່າຍໃຫ້ໃນເວລາທີ່ພະນັກງານອອກບ້ານານຂອງບໍລິສັດ ໂດຍກົມກອງຕົ້ນສະຫວັດດີການສັງຄົມທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ບໍລິສັດຕ້ອງໄດ້ປະກອບສ່ວນເຂົ້າໃນຜົນປະໂຫຍດພະນັກງານຫຼັງອອກການ ໂດຍການຈ່າຍຄ່າເບ້ຍປະກັນສັງຄົມໃຫ້ແກ່ຕົວແທນປະກັນສັງຄົມໃນອັດຕາ 6.00% ຂອງເງິນເດືອນພື້ນຖານຂອງພະນັກງານໃນແຕ່ລະເດືອນ, ບໍລິສັດບໍ່ມີພັນທະອື່ນໆທີ່ກ່ຽວຂ້ອງກັບຜົນປະໂຫຍດພາຍຫຼັງອອກການຂອງພະນັກງານ.

ຜົນປະໂຫຍດໃນການຍົກເລີກສັນຍາຈ້າງງານ

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ບໍລິສັດມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂດຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ແຂງແຮງ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ກໍລະນີບໍລິສັດພິຈາລະນາວ່າຈຳເປັນຕ້ອງຫຼຸດພະນັກງານ ເພື່ອປັບປຸງການເຮັດວຽກພາຍໃນອົງກອນ.

ສຳລັບການຍົກເລີກສັນຍາຈ້າງງານໃນອົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານ ໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານ ເດືອນສຸດທ້າຍຄູນໃຫ້ຈຳນວນເດືອນທີ່ເຮັດວຽກກັບບໍລິສັດ. ໃນວັນທີ 31 ທັນວາ 2025, ບໍ່ມີພະນັກງານບໍລິສັດຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ບໍລິສັດບໍ່ໄດ້ຕັກຕັ່ງແຂ ສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

5.16 *ເງິນແຂ*

ເງິນແຂຈະຖືກຮັບຮູ້ກໍ່ຕໍ່ເມື່ອບໍລິສັດມີພັນທະ (ທາງດ້ານກົດໝາຍ ຫຼື ທາງປະຕິບັດ) ເນື່ອງມາຈາກເຫດການທີ່ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊຳລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າດັ່ງກ່າວຕ້ອງເຊື່ອຖືໄດ້. ໃນເວລາທີ່ມີມູນຄ່າຫຼາຍຂອງມູນຄ່າເງິນເວລາ, ບໍລິສັດກຳນົດລະດັບເງິນແຂດ້ວຍວິທີເຄີດໄລ່ອັດຕາສ່ວນຫຼຸດລະແລະເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນອາກອນ ເຊິ່ງແມ່ນອັດຕາປັດຈຸບັນທີ່ກຳນົດໄວ້ສະເພາະກັບໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຜົ້ງແຂຖືກລາຍງານໃນໃບລາຍງານຜົນກຳໄລ ຫຼື ຂາດທຶນສຸດທ້ຽວຂອງການຊຳລະລາຍຈ່າຍໃນໃນລາຍຈ່າຍການດຳເນີນງານອື່ນໆ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.17 *ອາກອນກຳໄລ*

ອາກອນພາຍໃນປີ

ຊັບສິນ ແລະ ໜີ້ສິນອາກອນພາຍໃນປີ ສຳລັບປີປັດຈຸບັນ ແລະ ປີກ່ອນ ແມ່ນຖືກວັດແທກມູນຄ່າຕາມຈຳນວນທີ່ຄາດວ່າຈະເກັບ ຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນທີ່ຖືກນຳໃຊ້ຄິດໄລ່ອາກອນແມ່ນມີຜົນສັກສິດນຳໃຊ້ໃນມື້ລົງໃນລາຍງານຖານະການເງິນ ພາຍໃນປະເທດທີ່ບໍລິສັດດຳເນີນທຸລະກິດ ແລະ ສ້າງລາຍຮັບທີ່ຕ້ອງເສຍອາກອນ.

ອາກອນລາຍໄດ້ພາຍໃນປີທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີຕົນແມ່ນຖືກຮັບຮູ້ໃນຫົນເຈົ້າຂອງ ແລະ ບໍ່ໄດ້ມີການບັນທຶກໃນບັນຊີກຳໄລ ຫຼື ຂາດທຶນ, ຄະນະອຳນວຍການໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະ ໂດຍອີງຕາມກົດລະບຽບທາງດ້ານອາກອນ ເພື່ອການຕີລາຄາຄືນ ແລະ ສ້າງຕັ້ງແຂໃນເວລາທີ່ເໝາະສົມ.

ອາກອນເບື້ອນຊ່ຳລະ

ອາກອນເບື້ອນຊ່ຳລະ ແມ່ນຖືກຄິດໄລ່ ຈາກສ່ວນຕ່າງຊົ່ວຄາວ ຕາມມື້ທີ່ລອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນ ອາກອນ ແລະ ຍອດຍົກມາສຳລັບການລາຍງານການເງິນ. ໜີ້ຕ້ອງສີ່ງອາກອນເບື້ອນຊ່ຳລະແມ່ນຖືກຮັບຮູ້ເປັນສ່ວນຕ່າງອາກອນຊົ່ວຄາວ, ນິຍາເວັ້ນເມື່ອໜີ້ສິນອາກອນເບື້ອນຊ່ຳລະເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນການເຄື່ອນໄຫວທີ່ບໍ່ແມ່ນການລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລ ແລະ ຂາດທຶນທີ່ຖືກອາກອນ.

ຍອດຍົກມາຂອງໜີ້ຕ້ອງຮັບທາງອາກອນ ແມ່ນຖືກທວນຄືນໃນມື້ລົງບົດລາຍງານ ແລະ ຫຼຸດລົງ ຖ້າມີຄວາມເປັນໄປໄດ້ວ່າຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ຜົນສ່ວນໜຶ່ງຂອງໜີ້ ຕ້ອງຮັບອາກອນຈະຖືກອະນຸຍາດໃຫ້ໜ້ຳ. ໜີ້ຕ້ອງຮັບອາກອນທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ກະກຽມບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ໜີ້ຕ້ອງຮັບອາກອນ ສາມາດຫັກອອກໄດ້.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສີ່ງອາກອນເບື້ອນຊ່ຳລະແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ ພາຍໃນໄລຍະເມື່ອຊັບສິນຖືກຮັບຮູ້ມູນຄ່າຄືນຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍສ່ວນສາອາກອນ) ທີ່ໄດ້ປະກາດໃຊ້ນະມື້ລາຍງານ.

ອາກອນພາຍໃນປີ ແລະ ອາກອນເບື້ອນຊ່ຳລະຈະຖືກຮັບຮູ້ເປັນປະໂຫຍດທາງອາກອນ ຫຼື ຄ່າໃຊ້ຈ່າຍໃນໃບລາຍງານຜົນກຳໄລ ຫຼື ຂາດທຶນ, ນິຍາເວັ້ນອາກອນທີ່ກ່ຽວຂ້ອງກັບການຕີມູນຄ່າຕາມລາຄາຍຸດຕິທຳຂອງຊັບສິນທີ່ມີໄວ້ສຳລັບການຂາຍ, ການປ່ຽນຄ່າງອັດຕາແລກປ່ຽນ ແລະ ມູນຄ່າສຸດທິຂອງກະແສເງິນສົດ, ເຊິ່ງສາມາດຖືດຄ່າໜ້ານງ ຫຼື ບັນທຶກບັນຊີເປັນ OCI. ຂໍ້ນິຍາເວັ້ນເຫຼົ່ານີ້ແມ່ນໄດ້ຖືກຈັດບໍລິສັດເປັນໃໝ່ ຈາກ OCI ໄປໃນລາຍງານຜົນກຳໄລ ຫຼື ຂາດທຶນ ໃນບັນຊີກຳໄລ ຫຼື ຂາດທຶນ ລ່ວງໜ້ານະລະສະສາ. ບໍລິສັດຍັງໄດ້ຮັບຮູ້ອາກອນພາຍຫຼັງທີ່ມີການລ່ານະລະສະສາ ທີ່ກ່ຽວຂ້ອງກັບເຄື່ອງມືທາງດ້ານການເງິນທີ່ຖືກຈັດບໍລິສັດເປັນຫົນເຈົ້າຂອງ.

ບໍລິສັດຫັກລ້າງໜີ້ຕ້ອງຮັບ ແລະ ໜີ້ຕ້ອງສີ່ງອາກອນເບື້ອນຊ່ຳລະ ເມື່ອມີທັງສິດທາງດ້ານກົດໝາຍ ແລະ ບໍລິສັດມີຈຸດປະສົງທີ່ຈະຫັກລ້າງກັນບົນພື້ນຖານມູນຄ່າສຸດທິ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.18 *ມາດຕະຖານທີ່ໄດ້ອອກແລ້ວແຕ່ຍັງບໍ່ມີຜົນບັງຄັບໃຊ້*

ມາດຕະຖານ ແລະ ການຕີຄວາມໝາຍໃໝ່ ແລະ ທີ່ໄດ້ຮັບການດັດແກ້ທີ່ອອກແລ້ວ ແຕ່ຍັງບໍ່ທັນມີຜົນບັງຄັບໃຊ້ ກໍຈັ່ງຖືກປະເມີນໂດຍບໍລິສັດເພື່ອກຳນົດຜົນກະທົບຕໍ່ບົດລາຍງານການເງິນ. ດັ່ງທີ່ໄດ້ອະທິບາຍໄວ້ຂ້າງເທິງ, ນີ້ຈະລວມເຖິງ ມາດຕະຖານ ແລະ ການດັດແກ້ທີ່ຈະມີຜົນບັງຄັບໃຊ້ແລ້ວໂດຍອີງໃສ່ມາດຕະຖານ ຫຼື ການດັດແກ້ໃໝ່, ການຮັບຮອງໃນຫ້ອງຖິ່ນບັງຄຳເນີນຢູ່ ຫຼື ໄດ້ສົ່ງຜົນໃຫ້ມີຜົນບັງຄັບໃຊ້ໃນພາຍຫຼັງ.

ການດັດແກ້ການຈັດປະເພດ ແລະ ການຄິດໄລ່ເຄື່ອງມືທາງການເງິນ - ການດັດແກ້ IFRS 9 ແລະ IFRS 7

ໃນວັນທີ 30 ພຶດສະພາ 2024, IASB ໄດ້ອອກການດັດແກ້ IFRS 9 ແລະ IFRS 7, ການດັດແກ້ການຈັດປະເພດ ແລະ ການຄິດໄລ່ເຄື່ອງມືທາງການເງິນ (ການດັດແກ້). ການດັດແກ້ລວມມີ:

- ການຊີ້ແຈງຂໍ້ກຳນົດສຳລັບການຮັບຮູ້ ແລະ ການຍົກເລີກການຮັບຮູ້ຮັບສິນ ແລະ ໜີ້ສິນທາງການເງິນ
- ການຊີ້ແຈງໜີ້ສິນທາງການເງິນຖືກຍົກເລີກການຮັບຮູ້ໃນ ວັນທີຊຳລະ ແລະ ນຳສະເໜີທາງເລືອກນະໂຍບາຍການບັນຊີ (ຖ້າມີເງື່ອນໄຂສະເພາະ) ເພື່ອຍົກເລີກການຮັບຮູ້ໜີ້ສິນທາງການເງິນທີ່ຖືກຊຳລະໂດຍໃຊ້ລະບົບການຈ່າຍເງິນທາງອີເລັກໂທຣນິກກ່ອນວັນທີຊຳລະ
- ຄຳແນະນຳເພີ່ມເຕີມກ່ຽວກັບວິທີການປະເມີນກະແສເງິນສົດຕາມສັນຍາກ່ຽວກັບຮັບສິນທາງການເງິນທີ່ມີການຄຸ້ມຄອງດ້ານສິ່ງແວດລ້ອມ, ສັງຄົມ ແລະ ບໍລິສັດ (ESG) ແລະ ລັກສະນະທີ່ຄ້າຍຄືກັນ
- ການຊີ້ແຈງກ່ຽວກັບສິ່ງທີ່ປະກອບເປັນ 'ລັກສະນະທີ່ບໍ່ສາມາດຍົກຍ້ອງໄດ້' ແລະ ລັກສະນະຂອງເຄື່ອງມືທີ່ເຊື່ອມໂຍງກັບສັນຍາ
- ການນຳສະເໜີການເປີດເຜີຍຂໍ້ມູນກ່ຽວກັບເຄື່ອງມືທາງການເງິນທີ່ມີລັກສະນະທີ່ອາດຈະເກີດຂຶ້ນ ແລະ ຂໍ້ກຳນົດການເປີດເຜີຍເພີ່ມເຕີມສຳລັບເຄື່ອງມືແຊ່ງຫຸ້ນທີ່ຈັດປະເພດຕາມມູນຄ່າທີ່ຍຸດຕິທຳຜ່ານລາຍຮັບທີ່ຄົບຖ້ວນອື່ນໆ (OCI)

ການດັດແກ້ດັ່ງກ່າວມີຜົນບັງຄັບໃຊ້ສຳລັບງວດປະຈຳປີທີ່ເລີ່ມຕົ້ນໃນ ຫຼື ຫຼັງຈາກວັນທີ 1 ມັງກອນ 2026.

ກ່ຽວກັບການດັດແກ້ກ່ຽວກັບການຍົກເລີກການຮັບຮູ້ໜີ້ສິນທາງການເງິນທີ່ຖືກຊຳລະຜ່ານລະບົບການຈ່າຍເງິນທາງອີເລັກໂທຣນິກ, ບໍລິສັດໄດ້ດຳເນີນການປະເມີນຜົນຂອງລະບົບການຈ່າຍເງິນທາງອີເລັກໂທຣນິກທີ່ສຳຄັນທັງໝົດທີ່ໃຊ້ໃນເຂດອຳນາດການປົກຄອງຕ່າງໆທີ່ບໍລິສັດດຳເນີນການ.

ລະບົບການຊຳລະທາງອີເລັກໂທຣນິກສ່ວນໃຫຍ່ທີ່ບໍລິສັດໃຊ້ສົ່ງຜົນໃຫ້ເກີດການຊຳລະເວລາຈິງ. ມີລະບົບການຊຳລະທາງອີເລັກໂທຣນິກຈຳນວນຈຳກັດທີ່ບໍລິສັດໃຊ້ແຕ່ບໍ່ໄດ້ສົ່ງຜົນໃຫ້ເກີດການຊຳລະເວລາຈິງ. ສິ່ງເຫຼົ່ານັ້ນ, ບໍລິສັດໄດ້ຍົກເລີກການຮັບຮູ້ໜີ້ສິນທາງການເງິນ ແລະ ເງິນສົດທີ່ກ່ຽວຂ້ອງໃນເວລາສິ້ນສຸດການນຳການຈ່ຍເງິນ. ສຳລັບການດັດແກ້, ບໍລິສັດຈະປ່ຽນການປະຕິບັດໃນປະຈຸບັນນີ້ໄປສູ່ການຍົກເລີກການຮັບຮູ້ໜີ້ສິນທາງການເງິນ ແລະ ເງິນສົດທີ່ກ່ຽວຂ້ອງເມື່ອການຈ່າຍເງິນໄດ້ໄປເຖິງຜູ້ຮັບຜົນປະໂຫຍດ, ເຊິ່ງເປັນເວລາທີ່ຮັບຫະຖືກຍົກເລີກ. ຢ່ງໃດກໍຕາມ, ເນື່ອງຈາກຈຳນວນລະບົບການຊຳລະທາງອີເລັກໂທຣນິກດັ່ງກ່າວທີ່ບໍລິສັດໃຊ້ມີຈຳກັດ, ແລະ ມູນຄ່າການຈ່ຍເງິນທີ່ຕ່ຳ, ການດັດແກ້ດັ່ງກ່າວບໍ່ຄາດວ່າຈະມີຜົນກະທົບທີ່ສຳຄັນ. ບໍລິສັດໄດ້ກຳນົດວ່າຈະບໍ່ນຳໃຊ້ທີ່ວເລືອກນະໂຍບາຍການບັນຊີເພື່ອຍົກເລີກການຮັບຮູ້ໜີ້ສິນທາງການເງິນກ່ອນວັນຊຳລະ. ນອກຈາກນັ້ນ, ບໍລິສັດຍັງໄດ້ທົບທວນລະບົບການຈ່ຍເງິນອື່ນໆຂອງຕົນ (ເຊັ່ນ: ເຊັກ, ບັດເຄຣດິດ, ບັດເດບິດ) ແລະ ສະຫຼຸບອຳນະໂຍບາຍການຮັບຮູ້ ແລະ ການຍົກເລີກການຮັບຮູ້ແມ່ນສອດຄ່ອງກັບການແກ້ໄຂແລ້ວ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.18 *ມາດຕະຖານທີ່ໄດ້ອອກແລ້ວແຕ່ຍັງບໍ່ມີຜົນບັງຄັບໃຊ້ (ຕໍ່)*

ການນຳສະເໜີ ແລະ ການເປີດເຜີຍຂໍ້ມູນໃນບົດລາຍງານການເງິນ IFRS 18

ໃນເດືອນເມສາ 2024, IASB ໄດ້ອອກ IFRS 18 ການນຳສະເໜີ ແລະ ການເປີດເຜີຍຂໍ້ມູນໃນບົດລາຍງານການເງິນ, ເຊິ່ງ ທົດແທນການນຳສະເໜີບົດລາຍງານການເງິນ IAS 1. IFRS 18 ໄດ້ນຳສະເໜີແບບໃໝ່ກ່ຽວກັບຂໍ້ກຳນົດສຳລັບການນຳສະເ ໜີລາຍໃນບົດລາຍງານກຳໄລ ຫຼື ຂາດທຶນ, ລວມທັງຜົນລວມ ແລະ ຜົນລວມຍ່ອຍທັງໝົດທີ່ລະບຸໄວ້. ນອກຈາກນັ້ນ, ໜ່ ວຍງານຕ່າງໆຕ້ອງຈັດປະເພດລາຍຮັບ ແລະ ລາຍຈ່າຍທັງໝົດພາຍໃນບົດລາຍງານກຳໄລ ຫຼື ຂາດທຶນອອກເປັນໜຶ່ງໃນຫ້າ ປະເພດຄື: ການດຳເນີນງານ, ການລົງທຶນ, ການເງິນ, ພາສີລາຍໄດ້ ແລະ ການດຳເນີນງານທີ່ຢຸດຊະງັກ, ເຊິ່ງສາມປະເພດທຳ ອິດແມ່ນເລີ່ມໃໝ່. ມີຂໍ້ກຳນົດ ແລະ ທາງເລືອກການນຳສະເໜີສະເພາະສຳລັບໜ່ວຍງານຕ່າງໆ, ເຊັ່ນ Good Bank, ທີ່ມີ ກິດຈະກຳທຸລະກິດຫຼັກທີ່ລະບຸໄວ້ (ບໍ່ວ່າຈະເປັນການສະໜອງທຶນໃຫ້ແກ່ລູກຄ້າ ຫຼື ການລົງທຶນໃນຊັບສິນປະເພດສະເພາະ, ຫຼື ທັງສອງຢ່າງ).

ມາດຕະຖານດັ່ງກ່າວຮຽກຮ້ອງໃຫ້ມີການເປີດເຜີຍມາດຕະການການປະຕິບັດທີ່ກຳນົດໂດຍຝ່າຍບໍລິຫານໃໝ່, ຜົນລວມ ຍ່ອຍຂອງລາຍຮັບ ແລະ ລາຍຈ່າຍ, ແລະ ມັນຍັງປະກອບມີຂໍ້ກຳນົດໃໝ່ສຳລັບການລວມ ແລະ ການແຍກຂໍ້ມູນທາງການ ເງິນໂດຍອີງໃສ່ 'ບົດບາດ' ທີ່ກຳນົດໄວ້ຂອງບົດລາຍງານການເງິນຫຼັກ ແລະ ບັນທຶກ. ນອກຈາກນັ້ນ, ໄດ້ມີການດັດແກ້ຂອບ ເຂດຕໍ່ IAS 7 Statement of Cash Flows, ເຊິ່ງລວມມີການປ່ຽນແປງຈຸດເລີ່ມຕົ້ນສຳລັບການກຳນົດກະແສເງິນສົດຈາກ ການດຳເນີນງານພາຍໃຕ້ວິທີການທາງອ້ອມ, ຈາກ 'ກຳໄລ ຫຼື ຂາດທຶນ' ໄປເປັນ 'ກຳໄລ ຫຼື ຂາດທຶນຈາກການດຳເນີນງານ' ແລະ ການລຶບລ້າງທາງເລືອກກ່ຽວກັບການຈັດປະເພດກະແສເງິນສົດຈາກເງິນປັນຜົນ ແລະ ດອກເບ້ຍ. ນອກຈາກນັ້ນ, ຍັງມີ ການດັດແກ້ທີ່ເປັນຜົນສະທ້ອນຕໍ່ມາດຕະຖານອື່ນໆ.

ປະຈຸບັນບໍລິສັດກຳລັງກຳນົດຜົນກະທົບທີ່ມາດຕະຖານຕໍ່ບົດລາຍງານການເງິນຫຼັກ ແລະ ໝາຍເຫດປະກອບບົດລາຍງານ ການເງິນ. ບໍລິສັດຖືວ່າກິດຈະກຳທຸລະກິດຫຼັກຂອງຕົນລວມມີການສະໜອງທຶນໃຫ້ແກ່ລູກຄ້າ ແລະ ການລົງທຶນໃນຊັບສິນ ທາງການເງິນ. ອີງຕາມ IFRS 18, ລາຍຮັບ ແລະ ລາຍຈ່າຍບາງຢ່າງທີ່ກ່ຽວຂ້ອງກັບກິດຈະກຳເຫຼົ່ານີ້ຖືກຈັດປະເພດຢູ່ໃນ ໝວດໝູ່ການດຳເນີນງານ, ເປັນຂໍ້ຍົກເວັ້ນຕໍ່ຂໍ້ກຳນົດທົ່ວໄປທີ່ຖືບໍ່ດັ່ງນັ້ນຈະເຮັດໃຫ້ການຈັດປະເພດຂອງພວກເຂົາຢູ່ໃນໝ ວດໝູ່ການລົງທຶນ ຫຼື ການເງິນ.

ຜົນກະທົບທີ່ສຳຄັນໃນເບື້ອງຕົ້ນທີ່ຄາດໄວ້ຕາມ IFRS 18 ຕໍ່ບົດລາຍງານການເງິນຂອງບໍລິສັດມີດັ່ງນີ້:

- ລາຍຮັບ ແລະ ລາຍຈ່າຍຕໍ່ໄປນີ້ຈະຖືກຈັດປະເພດຢູ່ໃນໝວດການດຳເນີນງານພາຍໃນບົດລາຍງານກຳໄລ ຫຼື ຂາດທຶນ: (ກ) ເງິນສົດ ແລະ ມູນຄ່າທຽບເທົ່າເງິນສົດ; (ຂ) ໜີ້ສິນຈາກທຸລະກຳທີ່ກ່ຽວຂ້ອງກັບການລະດົມທຶນ ເທົ່ານັ້ນ; (ຄ) ໂດຍທົ່ວໄປ, ຊັບສິນທີ່ລົງທຶນເປັນສ່ວນໜຶ່ງຂອງກິດຈະກຳທຸລະກິດຫຼັກຂອງບໍລິສັດໃນການລົງທຶນ ໃນຊັບສິນທາງການເງິນທີ່ສ້າງຜົນຕອບແທນເປັນສ່ວນບຸກຄົນ ແລະ ສ່ວນໃຫຍ່ແມ່ນເປັນອິດສະຫຼະຈາກ ຊັບສະຍາທອນອື່ນໆຂອງບໍລິສັດ
- ຄວາມແຕກຕ່າງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດຈະຖືກຈັດປະເພດຢູ່ໃນໝວດດຽວກັບກັບລາຍຮັບ ແລະ ລາຍຈ່າຍທີ່ກ່ຽວຂ້ອງ ເຊິ່ງເຮັດໃຫ້ເກີດຄວາມແຕກຕ່າງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ, ໂດຍມີຂໍ້ ຍົກເວັ້ນບາງຢ່າງ.
- ລາຍຮັບແລະຄວາມເສຍຫາຍຂອງເຄື່ອງມືດຽວກັນ, ລວມທັງສິ່ງທີ່ບໍ່ໄດ້ກຳນົດໄວ້ເຊັ່ນນັ້ນ, ແຕ່ນຳໃຊ້ເພື່ອຄຸ້ມ ຄອງຄວາມສ່ຽງທີ່ຖືກກຳນົດ, ຈະຖືກຈັດຢູ່ໃນປະເພດດຽວກັບກັບລາຍຮັບແລະລາຍຈ່າຍທີ່ກ່ຽວຂ້ອງກັບຄວາມ ສ່ຽງທີ່ຖືກຄຸ້ມຄອງ, ໂດຍມີຂໍ້ຍົກເວັ້ນບາງຢ່າງ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.18 *ມາດຕະຖານທີ່ໄດ້ອອກແລ້ວແຕ່ຍັງບໍ່ມີຜົນບັງຄັບໃຊ້ (ຕໍ່)*

ການນຳສະເໜີ ແລະ ການເປີດເຜີຍຂໍ້ມູນໃນບົດລາຍງານການເງິນ IFRS 18

- ສຳລັບບົດລາຍງານກະແສເງິນສົດ, ຍອດລວມຍ່ອຍຂອງ 'ກຳໄລຈາກການດຳເນີນງານ' ຈະຖືກນຳໃຊ້ເປັນຈຸດເລີ່ມຕົ້ນຂອງການກຳນົດກະແສເງິນສົດຈາກກິດຈະກຳດຳເນີນງານ. ນອກຈາກນັ້ນ, ການຈັດປະເພດຂອງກະແສເງິນສົດທັງໝົດຈາກເງິນປັນຜົນທີ່ໄດ້ຮັບທັງໝົດ, ດອກເບ້ຍທີ່ຈ່າຍ ແລະ ໄດ້ຮັບທັງໝົດຈະຖືກຈັດປະເພດເປັນໝວດໝູ່ດຽວໃນບົດລາຍງານກະແສເງິນສົດຕາມລຳດັບ ຫຼັງຈາກການຈັດປະເພດລາຍຮັບ ແລະ ລາຍຈ່າຍທີ່ກ່ຽວຂ້ອງໃນບົດລາຍງານກຳໄລ ຫຼື ຂາດທຶນ.
- ການເປີດເຜີຍແບບໃໝ່ຈະຖືກເພີ່ມເຂົ້າສຳລັບ: (ກ) ມາດຕະການການປະຕິບັດທີ່ກຳນົດໂດຍຝ່າຍບໍລິຫານ; (ຂ) ຄ່າໃຊ້ຈ່າຍທີ່ລະບຸໄວ້ຕາມລັກສະນະຂອງຄ່າໃຊ້ຈ່າຍ ຖ້າຄ່າໃຊ້ຈ່າຍຖືກນຳສະເໜີຕາມໜ້າທີ່ໃນໝວດໝູ່ການດຳເນີນງານຂອງບົດລາຍງານກຳໄລ ຫຼື ຂາດທຶນ;

ການກະທົບຍອດແຕ່ລະລາຍການໃນບົດລາຍງານກຳໄລ ຫຼື ຂາດທຶນລະຫວ່າງຈຳນວນເງິນທີ່ໄດ້ປັບປຸງໃໝ່ທີ່ນຳສະເໜີໂດຍນຳໃຊ້ IFRS 18, ແລະ ຈຳນວນເງິນທີ່ໄດ້ນຳສະເໜີກ່ອນໜ້ານີ້ໂດຍນຳໃຊ້ IAS 1.

5.19 *ສ້າງຖັງສຳຮອງຕາມລະບຽບການ*

ຕາມໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ. 46/ສພຊ, ລົງວັນທີ 26 ທັນວາ 2013. ບໍລິສັດມະຫາຊົນຕ້ອງສ້າງຖັງແຈຈາກກຳໄລສຸດທິ ເພື່ອສ້າງຖັງສຳຮອງຕາມລະບຽບການ.

ຖັງສຳຮອງຕາມລະບຽບການ ແມ່ນກອງທຶນເພື່ອປ້ອງກັນຄວາມສ່ຽງ, ເຊິ່ງແມ່ນສົບເປີເຊັນ (10%) ຂອງກຳໄລສຸດທິເຂົ້າໃນຖັງສຳຮອງ, ຫຼັງຈາກທີ່ການຂາດທຶນສະສົມແລ້ວ. ເມື່ອຖັງສຳຮອງຕາມລະບຽບການມີຈຳນວນເກົ່າໜຶ່ງຂອງທຶນຈົດທະບຽນທີ່ຖອກແລ້ວ, ບໍລິສັດອາດຈະຢຸດການປ່ຽນຍອດກຳໄລເປັນຖັງສຳຮອງຖັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບການອະນຸມັດຈາກເຈົ້າຂອງບໍລິສັດ.

6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ

ໃນການກະກຽມເອກະສານລາຍງານການເງິນຂອງບໍລິສັດ, ຄຽກຄ້ອງໃຫ້ຄະນະອຳນວຍການຕ້ອງມີການພິຈາລະນາ, ຕີລາຄາ ແລະ ການປະເມີນຜົນກະທົບຕໍ່ຈຳນວນລາຍຮັບ, ລາຍຈ່າຍ, ຊັບສິນສິນ ແລະ ໜີ້ສິນ ແລະ ການເປີດເຜີຍທີ່ກ່ຽວຂ້ອງ, ລວມທັງການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາ ອາດຈະເຮັດໃຫ້ເກີດມີຄວາມຈຳເປັນຕ້ອງການດ້ານການຕັດສິນມູນຄ່າຂອງຍອດຍົກມາຂອງສິນສິນ ແລະ ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການໃຊ້ນະໂຍບາຍການບັນຊີຂອງສາຂາ, ຄະນະອຳນວຍການໄດ້ໃຊ້ດຸນພິນິດ ແລະ ຂໍ້ສົມມຸດຖານກ່ຽວກັບອະນາຄົດ ແລະ ແຫຼ່ງທີ່ມາທີ່ສຳຄັນອື່ນໆຂອງຄວາມບໍ່ແນ່ນອນ ນະວັນທີລາຍງານ, ທີ່ມີຄວາມສ່ຽງຢ່າງມີເນື້ອໃນສຳຄັນທີ່ຈະເຮັດໃຫ້ເກີດການປັບປຸງມູນຄ່າຕາມບັນຊີຂອງສິນສິນ ແລະ ໜີ້ສິນພາຍໃນປີການບັນຊີໃນຕໍ່ໜ້າ. ສະຖານະການ ແລະ ສົມມຸດຖານທີ່ມີຢູ່ກ່ຽວກັບການພັດທະນາໃນອະນາຄົດອາດປ່ຽນແປງໄດ້ເນື່ອງຈາກສະຖານະການທີ່ຢູ່ນອກໜ້ອການຄວບຄຸມຂອງສາຂາ ແລະ ສະທ້ອນໃຫ້ເຫັນໃນສົມມຸດຖານ ຖ້າເມື່ອມັນເກີດຂຶ້ນ. ລາຍການທີ່ມີຜົນກະທົບຢ່າງມີເນື້ອໃນສຳຄັນຫຼາຍທີ່ສຸດຕໍ່ຈຳນວນເງິນທີ່ຮັບຮູ້ໃນເອກະສານລາຍງານການເງິນທີ່ມີເນື້ອໃນສຳຄັນຖືກຈັດລຽງໄວ້ຢ່າງລຸ່ມໃນສ່ວນທີ່ກ່ຽວກັບການໃຊ້ດຸນພິນິດ/ການປະເມີນທີ່ກ່ຽວຂ້ອງ.

6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

6.1 *ຄ່າເສື່ອມມູນຄ່າຂອງຊັບສິນທາງການເງິນ* (ຕໍ່)

ໃນການປະເມີນຄ່າເສື່ອມມູນຄ່າພາຍໃຕ້ຮູບແບບ IFRS 9 ໃນທຸກປະເພດຂອງຊັບສິນທາງການເງິນຕາມຂອບເຂດທີ່ຈຽກລ້ອງໃຫ້ມີການພິຈາລະນາ, ໂດຍສະເພາະການຄາດຄະເນຈຳນວນ ແລະ ໄລຍະເວລາຂອງກະແສເງິນສົດໃນອະນາຄົດ ເມື່ອມີການກຳນົດຄ່າເສື່ອມ ແລະ ການປະເມີນຄວາມສ່ຽງສຳຄັນທີ່ອາດເພີ່ມຂຶ້ນ. ການຄາດຄະເນດັ່ງກ່າວໄດ້ຖືກຂັບເຄື່ອນໂດຍປັດໃຈດ້ານຈຳນວນ, ການປ່ຽນແປງທີ່ອາດສົ່ງຜົນໃຫ້ເກີດມີເງື່ອນໄຂຫຼາຍລະດັບທີ່ແຕກຕ່າງກັນ.

ການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດຂອງບໍລິສັດແມ່ນມີຜົນລັບເປັນຮູບແບບທີ່ຊັບຊ້ອນໂດຍມີພື້ນຖານຂໍ້ສົມມຸດຖານຈຳນວນໜຶ່ງທີ່ກ່ຽວກັບປັດໄຈຂໍ້ມູນ ແລະ ຄວາມເປັນອິດສະຫຼະຂອງບັນດາຂໍ້ມູນ. ອົງປະກອບຂອງວິທີການໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ ທີ່ຖືກພິຈາລະນາໃນການຕັດສິນໃຈທາງການບັນຊີ ແລະ ການຄາດຄະເນລວມທັງ:

- ຮູບແບບການໃຫ້ຄະແນນສິນເຊື່ອພາຍໃນຂອງບໍລິສັດ, ເຊິ່ງລະບຸຄວາມອາດຈະເປັນໄປໄດ້ໃນການຍົກນິດຊາລະໃນແຕ່ລະຄະແນນ;
- ເງື່ອນໄຂສຳລັບການປະເມີນຂອງບໍລິສັດວ່າມີການເພີ່ມຂຶ້ນທີ່ສຳຄັນໃນຄວາມສ່ຽງສິນເຊື່ອ ຫຼື ບໍ່ ແລະ ດັ່ງນັ້ນຄ່າໃຊ້ຈ່າຍສຳລັບຊັບສິນທາງການເງິນຄວນຈະຖືກຄິດໄລ່ບົນພື້ນຖານໜີ້ເສຍທີ່ຄາດວ່າຈະເກີດຂຶ້ນໄລຍະຍາວ ແລະ ການປະເມີນທາງດ້ານຄຸນນະພາບ;
- ການແບ່ງສ່ວນຊັບສິນທາງການເງິນເມື່ອໜີ້ເສຍທີ່ຄາດວ່າຈະເກີດຂຶ້ນຖືກປະເມີນແບບເປັນກຸ່ມ;
- ການຍົກຍ້ອນຮູບແບບ ໜີ້ເສຍທີ່ຄາດວ່າຈະເກີດ, ເຊິ່ງລວມເອົາບັນດາສູດຄິດໄລ່ ແລະ ຕົວເລືອກຂອງຂໍ້ມູນທີ່ປ້ອນເຂົ້າ;
- ການກຳນົດຄວາມສຳພັນລະຫວ່າງສະຖານະການເສດຖະສາດມະຫາພາກ ແລະ, ຂໍ້ມູນທາງເສດຖະສາດທີ່ປ້ອນເຂົ້າ, ເຊັ່ນວ່າ ການເຕີບໂຕຂອງ GDP, ດັດຊະນີ CPI ແລະ ອັດຕາການການກຳນົດຊຳລະ, ແລະ ຜົນກະທົບຕໍ່ PDs;
- ການເລືອກສະຖານະການເສດຖະສາດມະຫາພາກທີ່ຄາດການລ່ວງໜ້າ ແລະ ຄວາມອາດຈະເປັນໄປໄດ້ແບບຖ່ວງນ້ຳໜັກ ເພື່ອເປັນຂໍ້ມູນທາງເສດຖະສາດທີ່ປ້ອນເຂົ້າໃນຮູບແບບໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ.

ບໍລິສັດມີນະໂຍບາຍທີ່ຈະຕ້ອງກວດສອບຄືນຍັນຄາຮູບແບບໃນແຕ່ລະບໍລິບົດຂອງປະສົບການຄາດຫົນທີ່ເກີດຂຶ້ນຈິງ ແລະ ດັດແກ້ຮູບແບບເມື່ອຈຳເປັນ.

6.2 *ຄວາມສ່ຽງເບື້ອງໃນການດຳເນີນທຸລະກິດ*

ຄະນະອຳນວຍການຂອງບໍລິສັດໄດ້ປະເມີນຄວາມອາດສາມາດຂອງບໍລິສັດ ກ່ຽວຄວາມສ່ຽງເບື້ອງໃນການດຳເນີນທຸລະກິດ ແລະ ເປັນທີ່ໝັ້ນໃຈວ່າບໍລິສັດມີແຫຼ່ງທຶນ ເພື່ອສືບຕໍ່ໃນການດຳເນີນທຸລະກິດໃນອະນາຄົດ. ນອກຈາກນັ້ນ, ຄະນະອຳນວຍການບໍ່ ຍັບເຫັນສິ່ງບົ່ງບົດປົກກະຕິໃດໆເປັນທີ່ໜ້າສົງໃສຕໍ່ກັບຄວາມອາດສາມາດຂອງບໍລິສັດ ເພື່ອສືບຕໍ່ດຳເນີນງານກ່ຽວຄວາມສ່ຽງເບື້ອງໃນການດຳເນີນທຸລະກິດ. ເພາະສະນັ້ນ, ເອກະສານລາຍງານການເງິນ ບັງສືບຕໍ່ສ້າງຂຶ້ນບົນພື້ນຖານຄວາມສ່ຽງເບື້ອງໃນການດຳເນີນທຸລະກິດ.

6.3 *ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ ("EIR")*

ດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 5.2.1, ການຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດກຳນົດໄດ້ຢ່າງຖືກຕ້ອງທີ່ສຸດໂດຍນຳໃຊ້ອັດຕາຖືທີ່ ຕາມອາຍຸຂອງການເຊົ່າຊື້ ແລະ ຫຼັ້ຕ້ອງຮັບການເຊົ່າຊື້ຍືມ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການຈ່າຍລ່ວງໜ້າ, ຄ່າປັບໃໝ, ດອກເບ້ຍ ແລະ ຄ່າທຳນຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອົງປະກອບຂອງການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍຮັບ/ລາຍຈ່າຍອື່ນໆເປັນສ່ວນສຳຄັນຂອງເຄື່ອງມື.

6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

6.4 *ອາຍາຄ່ເບື້ອນຊຳລະດ້ານຊັບສິນ*

ອາຍາຄ່ເບື້ອນຊຳລະດ້ານຊັບສິນແມ່ນຖືກຮັບຮູ້ເປັນການຂາດທຶນທາງອາຍາຄ່ໃນຂອບເຂດທີ່ເປັນໄປໄດ້ວ່າຍັງກຳໄລທີ່ຕ້ອງເສຍອາຍາຄ່ໃນອະນາຄົດພຽງພໍສຳລັບການຂາດທຶນທາງອາຍາຄ່ນັ້ນ. ເຖິງວ່າການຂາດທຶນທາງອາຍາຄ່ໃນລາວສາມາດນຳໃຊ້ໄດ້ຢ່າງບໍ່ມີກຳນົດ, ແຕ່ຕ້ອງມີດຸນພິນິດເພື່ອກຳນົດມຸນຄ່າອາຍາຄ່ເບື້ອນຊຳລະດ້ານຊັບສິນທີ່ສາມາດຮັບຮູ້ໄດ້, ໂດຍອີງຕາມໄລຍະເວລາ ແລະ ລະດັບຂອງກຳໄລທີ່ຕ້ອງເສຍອາຍາຄ່ໃນອະນາຄົດ, ບວກກັບຍຸດທະສາດການວາງແຜນອາຍາຄ່ໃນອະນາຄົດ.

ເມື່ອບໍລິສັດສາມາດລົດແຫ່ງມຸນຄ່າການຫຼຸດລົງຂອງປີນປະໂຫຍດທາງເສດຖະກິດທີ່ກ່ຽວຂ້ອງກັບກ້ອນປີສະເພາະໃດໜຶ່ງ ແລະ ຍັງ ລະບຸການຫຼຸດລົງດັ່ງກ່າວຕາມຄວາມເປັນໄປໄດ້, ບໍລິສັດຈະບັນທຶກຂໍ້ກຳນົດສຳລັບກ້ອນປີດັ່ງກ່າວ. ໃນກໍລະນີທີ່ເປັນໄປໄດ້ຂອງການຫຼຸດລົງແມ່ນຖືວ່າຍັງຫ່າງໄກ, ຫຼື ເປັນໄປໄດ້, ແຕ່ບໍ່ສາມາດຄາດຄະເນທີ່ເຊື່ອຖືໄດ້, ຄວາມຮັບຜິດຊອບທີ່ອາດຈະເກີດຂຶ້ນແມ່ນເປີດເຜີຍ. ເຖິງຢ່າງໃດກໍ່ຕາມ, ເມື່ອບໍລິສັດມີຄວາມເຫັນວ່າການເປີດເຜີຍການຄາດຄະເນເຫຼົ່ານີ້ເປັນກໍລະນີຕ່ຳໄປຈະຂັດກັບຜົນໄດ້ຮັບຂອງພວກເຂົາ, ຫຼັງຈາກນັ້ນ, ບໍລິສັດບໍ່ໄດ້ລວມເອົາການເປີດເຜີຍລາຍລະອຽດສະເພາະໃນເອກະສານລາຍງານການເງິນຂອງຕົນ.

ເນື່ອງຈາກຫົວຂໍ້ ແລະ ຄວາມບໍ່ແນ່ນອນໃນການກຳນົດຄວາມເປັນໄປໄດ້ ແລະ ມຸນຄ່າທີ່ຍາດຫົນ, ບໍລິສັດໄດ້ພິຈາລະນາປັດໄຈຈຳນວນໜຶ່ງລວມທັງຄຳແນະນຳທາງດ້ານກົດໝາຍ, ຂັ້ນຕອນຂອງບັນຫາ ແລະ ຫຼັກຖານທາງອະດີດທີ່ເຫດການດ້ຽວຄືກັນ. ການຕັດສິນທີ່ສຳຄັນແມ່ນຈຳເປັນ ເພື່ອສະທ້ອນກ່ຽວກັບການຄາດຄະເນເຫຼົ່ານີ້.

6.5 *ການຕົກເງິນຜະ ແລະ ໜີ້ສິນທີ່ອາດຈະເກີດຂຶ້ນອື່ນໆ*

ບໍລິສັດດຳເນີນງານໃນສະພາບແວດລ້ອມດ້ານກົດລະບຽບ ແລະ ທາງດ້ານກົດໝາຍ, ໂດຍທຳມະຊາດແລ້ວ, ມີຄວາມສ່ຽງຕໍ່ການດຳເນີນຄະດີທີ່ອາດເກີດຂຶ້ນກັບການດຳເນີນງານຂອງຕົນ. ເຊິ່ງເປັນຜົນທີ່ກ່ຽວຂ້ອງມາຈາກການດຳເນີນຄະດີ, ການນິຕິສົມມຸດ ແລະ ການສືບສວນ ແລະ ການດຳເນີນຄະດີຕ່າງໆ, ເຊິ່ງເກີດຂຶ້ນຕາມປົກກະຕິໃນດຳເນີນຂອງທຸລະກິດຂອງບໍລິສັດ.

7. *ພາກສ່ວນຂອງຄົ້ນ*

ພາກສ່ວນຂອງຄົ້ນແມ່ນອີງປະກອບທີ່ກຳນົດແຍກຕ່າງຫາກ ເຊິ່ງປະກອບດ້ວຍທຸລະກິດໃນການຈັດຫາຜະລິດຕະພັນ ຫຼື ການບໍລິການທີ່ກ່ຽວຂ້ອງ (ພາກສ່ວນທຸລະກິດ) ຫຼື ການຈັດຫາຜະລິດຕະພັນ ຫຼື ການບໍລິການໃນສະພາບແວດລ້ອມທາງເສດຖະກິດສະເພາະ (ພາກສ່ວນທາງພູມສັນຖານ). ເຊິ່ງຂຶ້ນກັບຄວາມສ່ຽງ ແລະ ຜົນຕອບແທນທີ່ແຕກຕ່າງຈາກພາກສ່ວນໃດໜຶ່ງຂອງພາກສ່ວນອື່ນໆ.

ກິດຈະກຳຕົ້ນຕໍຂອງບໍລິສັດດ່ໃນອະນຸຍາດດຳເນີນທຸລະກິດແມ່ນ ການບໍລິການເຊົ່າຊື້ - ຂາຍ ໂດຍຜ່ານການສະໜອງສິນເຊື່ອສຳລັບລູກຄ້າສ່ວນບຸກຄົນ ແລະ ບໍລິສັດໃນການຊື້ລົດຈັກ ແລະ ລົດໃຫຍ່. ນອກຈາກນັ້ນ, ກິດຈະກຳເຫຼົ່ານີ້ແມ່ນດຳເນີນຢູ່ໃນ ສປປ ລາວເທົ່ານັ້ນ. ດັ່ງນັ້ນ, ຄວາມສ່ຽງ ແລະ ຜົນຕອບແທນຂອງບໍລິສັດຈຶ່ງບໍ່ໄດ້ຮັບຜົນກະທົບຈາກການບໍລິການ ທີ່ບໍລິສັດສະໜອງ ຫຼື ສະຖານທີ່ທີ່ບໍລິສັດດຳເນີນທຸລະກິດ. ດັ່ງນັ້ນ, ການນຳສະເໜີຂໍ້ມູນສ່ວນແມ່ນບໍ່ຈຳເປັນ.

8. ລາຍຮັບດອກເບ້ຍສຸດທິ

	2025 ກີບ	2024 ກີບ
ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງຈາກ:		
ໜີ້ຕ້ອງຮັບສັນຍາເຊົ່າຊື້	574,882,031,632	363,813,695,962
ເງິນຝາກປະຢັດ	3,459,454,263	1,209,860,378
	578,341,485,895	365,023,556,340
ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍອື່ນໆ	36,313,348,028	27,590,778,549
	614,654,833,923	**392,614,334,889**
ລາຍຈ່າຍດອກເບ້ຍທີ່ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງສຳລັບ:		
ລາຍຈ່າຍດອກເບ້ຍການກູ້ຢືມ	(17,237,314,571)	(6,116,526,245)
ລາຍຮັບດອກເບ້ຍສຸດທິ	**597,417,519,352**	**386,497,808,644**

9. ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າ

	2025 ກີບ	2024 ກີບ
ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າສຸດທີ່ສຳລັບ:		
ຄ່າທຳນຽມນາຍໜ້າ	10,258,526,711	10,845,320,682
ຄ່າທຳນຽມໂອນກຳມະສິດລົດໃຫ່ຍ/ລົດຈັກ	2,510,109,627	2,584,865,800
ຄ່າທຳນຽມອື່ນໆ	2,623,300,504	1,457,703,472
	15,391,936,842	**14,887,889,954**

10. ລາຍຮັບອື່ນໆຈາກການດຳເນີນງານ

	2025 ກີບ	2024 ກີບ
ລາຍຮັບອື່ນໆຈາກການດຳເນີນງານ	193,428,106	954,776,688
	193,428,106	**954,776,688**

11. ການປ່ຽນແປງເງິນຕະຫ່າເຜື່ອມມູນຄ່າ

ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນຄ່າ ECL ໃນເຄື່ອງມືການເງິນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025 ທີ່ຍັນທຶກໄວ້ໃນໃບລາຍງານຍັນການກຳໄລ ຫຼື ຂາດທຶນ:

	ບົດອະທິບາຍ	ຂັ້ນທີ 1	ຂັ້ນທີ 2	ຂັ້ນທີ 3	ລວມ
ເງິນສົດ ແລະ ທຽບເທົ່າເງິນສົດ	14	-	-	-	-
ເງິນຝາກຢູ່ ທຫລ	15	-	-	-	-
ໜີ້ຕ້ອງຮັບຕາມສັນຍາເຊົ່າຊື້	16	608,276,874	1,360,688,018	137,955,498,158	139,924,463,050
		608,276,874	**1,360,688,018**	**137,955,498,158**	**139,924,463,050**

ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນຄ່າ ECL ໃນເຄື່ອງມືການເງິນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024 ທີ່ຍັນທຶກໄວ້ໃນໃບລາຍງານຍັນການກຳໄລ ຫຼື ຂາດທຶນ:

	ບົດອະທິບາຍ	ຂັ້ນທີ 1	ຂັ້ນທີ 2	ຂັ້ນທີ 3	ລວມ
ເງິນສົດ ແລະ ທຽບເທົ່າເງິນສົດ	14	-	-	-	-
ເງິນຝາກຢູ່ ທຫລ	15	-	-	-	-
ໜີ້ຕ້ອງຮັບຕາມສັນຍາເຊົ່າຊື້	16	16,285,057,530	6,381,296,845	(81,337,891,644)	(58,671,537,269)
		16,285,057,530	**6,381,296,845**	**(81,337,891,644)**	**(58,671,537,269)**

12. ລາຍຈ່າຍທີ່ກ່ຽວຂ້ອງກັບພະນັກງານ

	2025 ກີບ	2024 ກີບ
ຄ່າແຮງງານ ແລະ ເງິນເດືອນ	58,962,588,861	54,776,552,774
ຄ່າໃຊ້ຈ່າຍອື່ນໆໃຫ້ພະນັກງານ	7,948,000,251	11,267,126,320
	66,910,589,112	**66,043,679,094**

13. ລາຍຈ່າຍໃນການດຳເນີນງານອື່ນໆ

	2025 ກີບ	2024 ກີບ
ອາກອນ ແລະ ພັນທະປະກັນສັງຄົມ	20,120,938,956	15,063,017,935
ຄ່າຊ່ຽ	10,048,933,511	7,883,285,308
ລາຍຈ່າຍທີ່ປຶກສາ	14,548,879,394	7,886,978,521
ຄ່າສາທາລະນຸປະໂພກ	6,646,495,334	6,087,596,483
ຄ່າໃຊ້ຈ່າຍໃນການຍົນສິ່ງ ແລະ ເດີນທາງ	6,027,225,389	5,277,933,550
ການສ້ອມແປງ ແລະ ບຳລຸງຮັກສາ	6,222,274,186	2,197,066,892
ອຸປະກອນ	2,287,930,970	2,566,385,189
ລາຍຈ່າຍທີ່ປຶກສາທາງກົດໝາຍ	2,076,644,429	266,805,900
ຄ່ານ້ຳມັນ	1,882,300,500	1,744,747,913
ລາຍຈ່າຍໄດສະນາ	1,476,505,626	1,460,628,962
ຄ່ານາວຄາສອນ	791,800,000	816,314,650
ລາຍຈ່າຍການຍັນເທິງ ແລະ ຂອງຂວັນ	2,993,674,594	2,792,278,015
ລາຍຈ່າຍໂຮງແຮມສຳລັບການປະຊຸມ	5,140,812,269	4,333,577,960
ອື່ນໆ	2,884,401,146	4,512,969,384
	83,148,816,304	**62,889,586,662**

14. ເງິນສົດ ແລະ ທຽບເທົ່າເງິນສົດ

	31 ທັນວາ 2025 ກີບ	31 ທັນວາ 2024 ກີບ
ເງິນສົດໃນຄັງ	634,517,497	1,897,156,383
ເງິນຝາກທະນາຄານ/ເງິນຝາກປະຢັດ(ສະກຸນຕ່າງປະເທດ)		
- ສະກຸນເງິນກີບ	6,308,405,772	1,680,499,951
- ສະກຸນເງິນຍາດ	5,662,556,430	2,500,193,578
- ສະກຸນເງິນໄດລາ	73,110,182,110	73,297,063,712
- ສະກຸນເງິນອື່ນໆ	176,966,070	168,510,855
ເງິນຝາກມີກຳນົດອາຍຸຕ່ຳກວ່າ 3 ເດືອນ ສະກຸນເງິນໄດລາ	21,400,000,000	22,066,401,389
ເງິນແຂສຳລັບຫນີ້ທີ່ດາດຄະເນຈະສູນເສຍ	-	-
	107,292,627,879	**101,609,825,868**

14. ເງິນສົດ ແລະ ຫຽບເທົ່າເງິນສົດ (ຕໍ່)

ມູນຄ່າຕາມບັນຊີຂອງເງິນຝາກມີກຳນົດຕໍ່ກວ່າ 3 ເດືອນ

ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນຄຸນນະພາບຂອງສິນເຊື່ອ ແລະ ຄວາມສ່ຽງສູງສຸດຂອງສິນເຊື່ອ ບົນພື້ນຖານຂັ້ນຕອນການຈັດປະເພດຂອງບໍລິສັດ. ຈຳນວນທີ່ບໍ່ສະເໜີແມ່ນລວມຍອດມູນຄ່າຕາມບັນຊີ. ລາຍລະອຽດຂອງລະບົບການໃຫ້ຄະແນນພາຍໃນຂອງບໍລິສັດແມ່ນໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 29.

	31 ທັນວາ 2025		*31 ທັນວາ 2024*
	ຂັ້ນຕອນ 1	*ລວມ*	*ລວມ*
	ກີບ	*ກີບ*	*ກີບ*
0 DPD	21,400,000,000	21,400,000,000	22,066,401,389
	21,400,000,000	**21,400,000,000**	**22,066,401,389**

ການສົມທຽບການປ່ຽນແປງໃນມູນຄ່າຕາມບັນຊີແມ່ນມີດັ່ງລຸ່ມນີ້:

	ຂັ້ນຕອນ 1
	ສ່ວນລວມກີບ
	ກີບ
ມູນຄ່າຕາມບັນຊີ ນະວັນທີ 01 ມັງກອນ 2025	**22,066,401,389**
ການຊື້ຊັບສິນໃໝ່	21,400,000,000
ການຈ່າຍ ແລະ ຊັບສິນທີ່ຢຸດເລີກຮູ້	(21,481,000,000)
ດອກເບ້ຍຄ້າງຈ່າຍ	579,793,425
ສ່ວນຕ່າງຈາກອັດຕາແລກປ່ຽນ	(1,165,194,814)
ມູນຄ່າຕາມບັນຊີ ນະວັນທີ 31 ທັນວາ 2025	**21,400,000,000**

15. ເງິນຝາກຢູ່ທະນາຄານ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ບັນຊີເງິນຝາກກັບ ທຫລ		
- ຄ້ຳສຳຮອງທີ່ບັງຄັບຂອງ ທຫລ (*)	1,968,900,000	1,968,900,000
ບັນຊີເງິນຝາກກັບທະນາຄານລາວຫວຽດ ຈຳກັດ		
- ເງິນຝາກມີກຳນົດສະກຸນເງິນໂດລາ	131,558,618,718	129,212,628,904
ເງິນສຳລັບໜີ້ທີ່ຄາດຄະເນຈະສູນເສຍ	-	-
	133,527,518,718	**131,181,528,904**

(*) ພາຍໃຕ້ກົດລະບຽບຂໍ້ບັງຄັບຂອງ ທຫລ, ບໍລິສັດຈະຕ້ອງຮັກສາຍອດເງິນຝາກຕ່ຳສຸດບ່ຳ ທະນາຄານແຫ່ງ ສປປ ລາວ ເຊິ່ງຍອດຕ່ຳສຸດແມ່ນ 5% ຂອງທຶນຈົດທະບຽນ, ໂດຍອີງຕາມການແຈ້ງການຈາກ ທຫລ ເປັນແຕ່ລະໄລຍະ. ຍອດຂອງເງິນຝາກນີ້ແມ່ນຈະບໍ່ໄດ້ຮັບດອກເບ້ຍ.

15. ເງິນຝາກຢູ່ທະນາຄານ (ຕໍ່)

ມູນຄ່າຕາມບັນຊີໝົດກຳນົດຄືນຈາກທະນາຄານ

ຕາຕະລາງຂ້າງລຸ່ມນີ້ໄດ້ສະແດງໃຫ້ເຫັນຄຸນນະພາບຂອງສິນເຊື່ອ ແລະ ຄວາມສ່ຽງສູງສຸດຂອງສິນເຊື່ອ ບົນພື້ນຖານຍົກຕອນການຈັດປະເພດຂອງບໍລິສັດ. ຈຳນວນທີ່ນຳສະເໜີແມ່ນລວມຍອດມູນຄ່າຕາມບັນຊີ. ລາຍລະອຽດຂອງລະບົບການໃຫ້ຄະແນນພາຍໃນຂອງບໍລິສັດແມ່ນໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 29.

	31 ທັນວາ 2025		*31 ທັນວາ 2024*
	ຂັ້ນທີ 1	*ລວມ*	*ລວມ*
	ກີບ	*ກີບ*	*ກີບ*
0 DPD	131,558,618,718	131,558,618,718	129,212,628,904
	131,558,618,718	**131,558,618,718**	**129,212,628,904**

ການສົມທຽບການປ່ຽນແປງໃນມູນຄ່າຕາມບັນຊີແມ່ນມີດັ່ງລຸ່ມນີ້:

	ຂັ້ນທີ 1
	ແບບລຸ່ມຄົນ
	ກີບ
ມູນຄ່າຕາມບັນຊີຂັ້ນຕົ້ນປະຈຳວັນທີ 01 ມັງກອນ 2025	**129,212,628,904**
ການຊື້ຊັບສິນໃໝ່	-
ການຈ່າຍ ແລະ ຊັບສິນທີ່ຢຸດຮັບຮູ້	-
ດອກເບ້ຍຄ້າງຈ່າຍ	3,459,454,263
ສ່ວນຕ່າງຈາກອັດຕາແລກປ່ຽນ	(1,113,464,449)
ມູນຄ່າຕາມບັນຊີຂັ້ນຕົ້ນປະຈຳວັນທີ 31 ທັນວາ 2025	**131,558,618,718**

16. ໜີ້ຕ້ອງຮັບສັນຍາເຊົ່າຊື້

16.1 *ໜີ້ຕ້ອງຮັບສັນຍາເຊົ່າຊື້*

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ໜີ້ຕ້ອງຮັບສັນຍາເຊົ່າຊື້	1,915,802,209,794	1,680,423,158,815
ເງິນຮັບລ່ວງໜ້າທີ່ຄາດຄະເນຈະສູນເສຍ	(459,843,948,598)	(316,773,865,657)
	1,455,958,261,196	**1,363,649,293,158**
ເຊິ່ງລວມ:		
ສ່ວນທີ່ໝຸນວຽນ	*1,351,427,781,004*	*1,329,813,233,523*
ສ່ວນທີ່ບໍ່ໝຸນວຽນ	*104,530,480,192*	*33,836,059,635*

16. ໜີ້ຕ້ອງຮັບສັນຍາເຊົ່າຊື້ (ຕໍ່)

16.1 *ໜີ້ຕ້ອງຮັບສັນຍາເຊົ່າຊື້ (ຕໍ່)*

ບັນດາສັນຍາແມ່ນໄດ້ຖືກໂອນຢ່າງສຳເລັດໃຫ້ກັບຜູ້ຊື້ ຫຼັງຈາກໄດ້ຊຳລະຕົ້ນທຶນ ແລະ ດອກເບ້ຍສຳເລັດ.

ອັດຕາດອກເບ້ຍສຳລັບໜີ້ຕ້ອງຮັບສັນຍາເຊົ່າຊື້ມາຍໃນປີແມ່ນດັ່ງລຸ່ມນີ້:

	2025	*2024*
	% ຕໍ່ປີ	*% ຕໍ່ປີ*
ໜີ້ຕ້ອງຮັບສັນຍາເຊົ່າຊື້ຈາກທະນະຄິດທະນັນລິດໃຫຍ່	0.01 - 9.40	0.01 - 6.00
ໜີ້ຕ້ອງຮັບສັນຍາເຊົ່າຊື້ຈາກທະນະຄິດທະນັນລິດຈັກ	0.02 - 16.00	0.02 - 16.00
ໜີ້ຕ້ອງຮັບສັນຍາເຊົ່າຊື້ຈາກທະນະຄິດທະນັນອະສັງຫາລິມະຊັບ	2.50 - 5.00	2.50 - 5.00

ວິເຄາະໂດຍໄລຍະເວລາກັບຄືນ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ໄລຍະສັ້ນ	408,956,901,649	471,268,877,841
ໄລຍະກາງ	1,442,418,366,165	1,151,195,697,652
ໄລຍະຍາວ	64,426,941,980	57,958,583,322
	1,915,802,209,794	**1,680,423,158,815**

ວິເຄາະໂດຍສະກຸນເງິນ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ໜີ້ຕ້ອງຮັບສັນຍາເຊົ່າຊື້ໃນສະກຸນເງິນ ກີບ	278,265,648,995	308,987,321,602
ໜີ້ຕ້ອງຮັບສັນຍາເຊົ່າຊື້ໃນສະກຸນເງິນ ໂດລາ	1,363,518,963,468	1,133,116,466,378
